# ການດຳເນີນ ທຸລະກິດ ຢູ່ ສປປ ລາວ



## ແຜນດຳເນີນງານ 2020 - 2022



ກໍລະກົດ 2020

ຈັດພິມໂດຍ:
ໂຮງພິມ ສັນຕິພາບ

ອອກແບບ ແລະ ຈັດໜ້າໂດຍ:
ບໍລິສັດ ອິນສະໄໝ ການສື່ສານທີ່ສ້າງສັນ
www.insmai.com

ກວດແກ້ເນື້ອໃນໂດຍ:
ກົມສົ່ງເສີມການລົງທຶນ
ກະຊວງແຜນການ ແລະ ການລົງທຶນ
ຖະໜົນສຸພານຸວົງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 217010
ອີເມວ: ipd_mpilaos@investlaos.gov.la
ເວັບໄຊ: www.investlaos.gov.la





**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**
**ທອງລຸນ ສີສຸລິດ**

**"...ລັດຖະບານໄດ້ເອົາໃຈໃສ່ຢ່າງຕັ້ງໜ້າເພື່ອປັບປຸງບັນຍາກາດໃນການດຳເນີນທຸລະກິດ ຢູ່ ສປປ ລາວໃຫ້ມີຄວາມສະດວກຂຶ້ນໂດຍຫຼຸດຜ່ອນຂັ້ນຕອນ, ເວລາ ແລະ ຄ່າໃຊ້ຈ່າຍໃນການອອກອະນຸຍາດຕ່າງໆ ຂອງຂະແໜງການກ່ຽວຂ້ອງໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ມີຜົນສັກສິດ. ແນໃສ່ດຶງດູດເອົາການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດທີ່ມີຄຸນນະພາບ, ຊຸກຍູ້ສົ່ງເສີມ ແລະ ສ້າງຂີດຄວາມອາດສາມາດໃນການແຂ່ງຂັນຂອງທຸລະກິດໃຫ້ສູງຂຶ້ນ ເພື່ອໃຫ້ກາຍເປັນ ກຳລັງທີ່ສຳຄັນປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະໃຫ້ບັນລຸຄາດໝາຍທີ່ວາງໄວ້, ສ້າງພື້ນຖານເສດຖະກິດແຫ່ງຊາດໃຫ້ເຕີບໂຕຢ່າງໝັກແໜ້ນ, ໝັ້ນທ່ຽງ, ຕາມທິດຍືນຍົງ ແລະ ສີຂຽວ ທີ່ລະບຸໄວ້ໃນມະຕິຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ"**

# ຄຳນຳ

ໃນແຕ່ລະປີ, ກຸ່ມທະນາຄານໂລກໄດ້ເຮັດການປະເມີນຄວາມສະດວກຮອບດ້ານຂອງການດຳເນີນທຸລະກິດໃນ 190 ປະເທດ ແລະ ຂົງເຂດເສດຖະກິດໃຫຍ່ທົ່ວໂລກ. ໃນບົດລາຍງານຄວາມສະດວກໃນການດຳເນີນທຸລະກິດ (Doing Business) ປີ 2020, ສປປ ລາວ ແມ່ນຈັດຢູ່ໃນອັນດັບທີ 154 ໃນທົ່ວໂລກ ແລະ ເປັນອັນດັບທີ່ 9 ໃນອາຊຽນ ຮອງຈາກປະເທດມຽນມາ (165).

ຕໍ່ບົດລາຍງານດັ່ງກ່າວນັ້ນ, ໄດ້ປຸກລະດົມໃຫ້ບັນດາປະເທດຕ່າງໆມີການແຂ່ງຂັນເພື່ອປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດໃຫ້ມີປະສິດທິພາບ. ຊຶ່ງ ສປປ ລາວ ກໍ່ໄດ້ອອກຄຳສັ່ງ ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018 ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ, ຄຳສັ່ງເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020 ວ່າດ້ວຍການປັບປຸງວຽກງານບໍລິການ ການອອກໃບອະນຸຍາດລົງທຶນ ແລະ ໃບອະນຸຍາດດຳເນີນທຸລະກິດ ແລະ ຄຳສັ່ງ ເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019 ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການນຳເຂົ້າຊົ່ວຄາວ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ ໂດຍມອບໃຫ້ແຕ່ລະຂະແໜງການເອົາໃຈໃສ່ປັບປຸງຕົວຊີ້ວັດຕາມຂອບເຂດສິດ ແລະ ໜ້າທີ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອສຸມໃສ່ປັບປຸງບັນຍາກາດໃນການດຳເນີນທຸລະກິດຢູ່ພາຍໃນປະເທດໃຫ້ດີຂຶ້ນ ແນ່ໃສ່ຍາດແຍ່ງ ແລະ ດຶງດູດເອົາການລົງທຶນທີ່ມີຄຸນນະພາບ, ຊຸກຍູ້ສົ່ງເສີມ ແລະ ສ້າງຂີດຄວາມສາມາດໃນການແຂ່ງຂັນຂອງທຸລະກິດພາຍໃນໃຫ້ສູງຂຶ້ນ.

ຜ່ານການຈັດຕັ້ງປະຕິບັດຄຳສັ່ງໃນໄລຍະ 1 ປີ ຜ່ານມາ, ເຫັນວ່າຫຼາຍຂະແໜງການກໍ່ໄດ້ເອົາໃຈໃສ່ໃນການປັບປຸງຢ່າງຕັ້ງໜ້າແຕ່ໂດຍລວມຍັງເຫັນວ່າສະພາບແວດລ້ອມໃນການດຳເນີນທຸລະກິດຢູ່ ສປປ ລາວ ແມ່ນບໍ່ທັນອຳນວຍເທົ່າທີ່ຄວນ ສະແດງອອກຈາກອັນດັບຄວາມສະດວກໃນການດຳເນີນທຸລະກິດ ຂອງ ສປປ ລາວ ແມ່ນມີທ່າອ່ຽງຫຼຸດລົງເລື້ອຍມາ.

ສິ່ງດັ່ງກ່າວນັ້ນ ໄດ້ຮຽກຮ້ອງໃຫ້ທຸກພາກສ່ວນເອົາໃຈໃສ່ ຖືເອົາວຽກງານການປັບປຸງບັນດາລະບຽບການ ແລະ ກົນໄກ ປະສານງານໃນການດຳເນີນທຸລະກິດເປັນວຽກງານອັນຮີບດ່ວນ ແລະ ເປັນບູລິມະສິດທີ່ພວກເຮົາທຸກຄົນຕ້ອງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຢ່າງມີແບບແຜນ, ຊຶ່ງເຫັນວ່າຍັງມີຫຼາຍບັນຫາທີ່ພົ້ນເດັ່ນຕ້ອງໄດ້ເອົາໃຈໃສ່ ແລະ ແກ້ໄຂ ເພື່ອຮັບປະກັນຄວາມຕໍ່ເນື່ອງ ແລະ ຍືນຍົງ.

ກະຊວງ ແຜນການ ແລະ ການລົງທຶນ ໃນນາມເປັນໃຈກາງປະສານກັບຂະແໜງການກ່ຽວຂ້ອງເພື່ອຕິດຕາມຄວາມຄືບໜ້າໃນການແກ້ໄຂຂອດຂັ້ນຫຍຸ້ງຍາກໃນບັນດາ 10 ຕົວຊີ້ວັດ ກ່ຽວກັບຄວາມສະດວກໃນການດຳເນີນທຸລະກິດທີ່ທາງທະນາຄານໂລກວາງອອກ ຈຶ່ງໄດ້ສ້າງປຶ້ມແຜນດຳເນີນງານການປັບປຸງແຕ່ລະຕົວຊີ້ວັດຂອງຂະແໜງການກ່ຽວຂ້ອງ ເພື່ອເຜີຍແຜ່ໃຫ້ອົງການຕ່າງໆຂອງພາກລັດ ຕະຫຼອດຮອດພາກເອກະຊົນໄດ້ຮັບຊາບ ແລະ ຕິດຕາມ. ໃນນັ້ນ, ກໍ່ແມ່ນ ເພື່ອເປັນການສະໜອງຂໍ້ມູນໃຫ້ແກ່ບັນດາຜູ້ໃຫ້ທຶນຕ່າງໆ ທີ່ມີຄວາມສົນໃຈໃຫ້ການສະໜັບສະໜູນທາງດ້ານທຶນຮອນ ຫຼື ວິຊາການ ເພື່ອຊຸກຍູ້ວຽກງານປັບປຸງຄວາມສະດວກໃນການດຳເນີນທຸລະກິດຢູ ສປປ ລາວ ໃຫ້ດີຂຶ້ນເປັນກ້າວໆ.

ຕາງໜ້າຄະນະນຳກະຊວງ ແຜນການ ແລະ ການລົງທຶນ ຂໍສະແດງຄວາມຂອບໃຈມາຍັງຂະແໜງການກ່ຽວຂ້ອງທີ່ໄດ້ ໃຫ້ການຮ່ວມມື ແລະ ເອົາໃຈໃສ່ໃນການຮ່າງແຜນດຳເນີນງານນີ້ໄດ້ສຳເລັດຕາມເປົ້າໝາຍ ແລະ ຂໍຂອບໃຈອົງການ ຮ່ວມມື ລາວ-ເຢຍລະມັນ (GIZ) ທີ່ໄດ້ສະໜັບສະໜູນທຶນຮອນໃນການສ້າງ ແລະ ພິມປຶ້ມແຜນດຳເນີນງານສະບັບນີ້.

ຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າ ປຶ້ມແຜນດຳເນີນງານສະບັບນີ້ ຈະເປັນຂໍ້ມູນທີ່ມີປະໂຫຍດສຳລັບວຽກງານຕິດຕາມການ ປັບປຸງຄວາມສະດວກໃນການດຳເນີນທຸລະກິດຢູ່ ສປປ ລາວ. ຖ້າຫາກມີກໍລະນີຜິດພາດ ແລະ ຄວາມບໍ່ສອດຄ່ອງໃນບາງຈຸດ ພວກເຮົາຍິນດີຮັບເອົາຄຳຄິດຄຳເຫັນຂອງທ່ານເພື່ອເປັນການປັບປຸງໃຫ້ດີຂຶ້ນສຳລັບຄັ້ງຕໍ່ໄປ

ຮອງນາຍົກລັດຖະມົນຕີ,
ລັດຖະມົນຕີກະຊວງ ແຜນການ ແລະ ການລົງທຶນ
ສອນໄຊ ສີພັນດອນ



# ສາລະບານ


ຄຳນຳ....................................................................................................... 2

ຄະນະ ແລະ ກອງເລຂາປັບປຸງບັນດາລະບຽບການ ແລະ
ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ........................ 4

ຄວາມສະດວກໃນການດຳເນີນທຸລະກິດຢູ່ ສປປ ລາວ ທຽບກັບ ອາຊີ ...... 5

ການປ່ຽນແປງຂອງອັນດັບ ແລະ ຄະແນນໃນສົກປີ 2019-2020 ............ 6

ກ່ຽວກັບແຜນດຳເນີນງານ ........................................................................ 9

ແຜນດຳເນີນງານ 2020-2022 ................................................................ 11

ການເລີ່ມຕົ້ນທຸລະກິດ ............................................................................. 12

ການຂໍອະນຸຍາດປຸກສ້າງ ........................................................................ 18

ການຂໍຕິດຕັ້ງໄຟຟ້າ ................................................................................ 20

ການຈົດທະບຽນຊັບສິນ ........................................................................ 24

ການເຂົ້າເຖິງສິນເຊື່ອ ............................................................................. 28

ປົກປ້ອງຜູ້ລົງທຶນລາຍຍ່ອຍ .................................................................... 30

ການຊຳລະອາກອນ ................................................................................ 32

ການຄ້າລະຫວ່າງປະເທດ ........................................................................ 36

ການບັງຄັບໃຊ້ສັນຍາ .............................................................................. 40

ການແກ້ໄຂການລົ້ມລະລາຍ ..................................................................... 44

ການດຳເນີນ
ທຸລະກິດ
ຢູ່ ສປປ ລາວ

ແຜນດຳເນີນງານ
2020 - 2022

# ຄະນະ ແລະ ກອງເລຂາປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ

| ກະຊວງຮັບຜິດຊອບ | ຕົວຊີ້ວັດທີ່ຖືກມອບໝາຍໃຫ້ |
|---|---|
| ກະຊວງ ແຜນການ ແລະ ການລົງທຶນ (ກຜທ) | ເປັນໃຈກາງໃນການປະສານງານ |
| ກະຊວງ ອຸດສາຫະກຳ ແລະ ການຄ້າ (ກອຄ) | ການເລີ່ມຕົ້ນທຸລະກິດ ແລະ ການຄ້າລະຫວ່າງປະເທດ |
| ກະຊວງ ໂຍທາທິການ ແລະ ຂົນສົ່ງ (ກຍທຂ) | ການຂໍອະນຸຍາດປຸກສ້າງ |
| ກະຊວງ ພະລັງງານ ແລະ ບໍ່ແຮ່ (ກພບ) | ການຕິດຕັ້ງໄຟຟ້າ |
| ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) | ການຂຶ້ນທະບຽນຊັບສິນ |
| ທະນາຄານແຫ່ງ ສປປ ລາວ (ທຫລ) | ການເຂົ້າເຖິງສິນເຊື່ອ ແລະ ການປົກປ້ອງຜູ້ລົງທຶນລາຍຍ່ອຍ |
| ກະຊວງ ການເງິນ (ກກງ) | ການຊຳລະອາກອນ |
| ກະຊວງ ຍຸຕິທຳ ແລະ ອົງການຕຸລາການ (ກຍ) | ການບັງຄັບໃຊ້ສັນຍາ ແລະ ການແກ້ໄຂບັນຫາລົ້ມລະລາຍ |
| ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) | ປະກອບສ່ວນເຂົ້າໃນຂະບວນການຄົ້ນຄວ້າ ແລະ ປັບປຸງແກ້ໄຂຄວາມຫຍຸ້ງຍາກຕ່າງໆ |

# ຄວາມສະດວກໃນການດຳເນີນທຸລະກິດຢູ່ ສປປ ລາວ ທຽບກັບ ອາຊີ

ໃນໄລຍະ 10 ປີຜ່ານມາ, ປະເທດໄທ ແລະ ມາເລເຊຍ ສາມາດຮັກສາອັນດັບການດຳເນີນທຸລະກິດທີ່ດີໄດ້ໂດຍການປັບປຸງການບໍລິຫານ ແລະ ຂັ້ນຕອນລະບຽບການຂອງຕົນຢ່າງຕໍ່ເນື່ອງ. ຕະຫຼອດໄລຍະ 60 ປີທີ່ຜ່ານມາປະເທດ ມາເລເຊຍ ໄດ້ພັດທະນາເສດຖະກິດໂດຍຫັນຈາກຜູ້ສົ່ງອອກສິນຄ້າແຮ່ທາດມາເປັນສູນກາງດ້ານການບໍລິການໃນພາກພື້ນເພື່ອດຶງດູດການລົງທຶນ. ສ່ວນປະເທດໄທແມ່ນໄດ້ນຳສະເໜີນະໂຍບາຍ "ອຸດສາຫະກຳ 4.0" ເພື່ອອຳນວຍຄວາມສະດວກ ແລະ ປັບປຸງການບໍລິການຂອງພາກລັດໃຫ້ແກ່ພາກເອກະຊົນ. ສອງປະເທດນີ້ໄດ້ຫັນປ່ຽນມາເປັນນັກປະຕິຮູບທີ່ດີທີ່ສຸດ ແລະ ກາຍເປັນເປົ້າໝາຍການລົງທຶນທີ່ມີການແຂ່ງຂັນສູງໃນທະວີບອາຊີ.

ໃນຂະນະດຽວກັນ, ປະເທດ ຫວຽດນາມ ແລະ ອິນໂດເນເຊຍ ໄດ້ປະຕິຮູບເງື່ອນໄຂຂອງກອບນະໂຍບາຍ ແລະ ການບໍລິການຢ່າງຕໍ່ເນື່ອງເພື່ອດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ (FDI). ບັນດາປະເທດເຫຼົ່ານີ້ໄດ້ຫຼຸດອັນດັບ ຄວາມສະດວກໃນການດຳເນີນທຸລະກິດຂອງເຂົາເຈົ້າລົງເທື່ອລະກ້າວ ແລະ ກາຍເປັນເປົ້າໝາຍການລົງທຶນທີ່ພົ້ນເດັ່ນໃນພາກພື້ນໃນຊ່ວງຊຸມປີມໍ່ໆມານີ້.

ສປ ຈີນ ມີການພັດທະນາຢ່າງພົ້ນເດັ່ນຈີນກາຍເປັນໜຶ່ງໃນເສດຖະກິດທີ່ມີການປະຕິຮູບໄວທີ່ສຸດ ເຖິງແມ່ນວ່າ ສປ ຈີນ ຈະມີແຜນດິນ ອັນກວ້າງໃຫຍ່ ແລະ ລະບົບການເມືອງແບບລວມສູນທີ່ມີຄວາມທ້າທາຍ, ແຕ່ຈີນໄດ້ພິສູດໃຫ້ເຫັນເຖິງຄວາມເປັນໄປໄດ້ທີ່ຈະຕັ້ງໜ້າປະຕິຮູບບັນຍາກາດທາງທຸລະກິດຂອງຕົນໃຫ້ເປັນເສດຖະກິດທີ່ມີຄວາມໂປ່ງໃສ ແລະ ມີປະສິດທິພາບຫຼາຍຂຶ້ນ ຈີນເຮັດໃຫ້ສາມາດຫຼຸດອັນດັບຄວາມສະດວກໃນການດຳເນີນທຸລະກິດຈາກອັນດັບທີ 126 ມາເປັນອັນດັບທີ 31 ພາຍໃນໄລຍະເວລາພຽງ 10 ປີ.

ສຳລັບ ສປປ ລາວ ແລະ ປະເທດກຳປູເຈຍ ແມ່ນນອນຢູ່ໃນອັນດັບແຖວທ້າຍໆ ແລະ ຍັງຖືວ່າເປັນປະເທດທີ່ບໍ່ທັນ ດຶງດູດການລົງທຶນເທົ່າທີ່ຄວນ ເມື່ອທຽບໃສ່ບັນດາປະເທດສະມາຊິກອາຊຽນອື່ນໆ. ສປປ ລາວ ຈຳເປັນຕ້ອງມີການປະຕິຮູບດ້ານນິຕິກຳ ແລະ ການບໍລິຫານຂອງຕົນຢ່າງຫຼວງຫຼາຍເພື່ອປັບປຸງການບໍລິການທາງພາກລັດໃຫ້ມີບັນຍາກາດ ແລະ ສະພາບແວດລ້ອມການດຳເນີນທຸລະກິດທີ່ດີຂຶ້ນ.




*ທີ່ມາ: Trading Economics*



# ການປ່ຽນແປງຂອງອັນດັບ ແລະ ຄະແນນໃນສົກປີ 2019-2020

ອັນດັບ

ຄະແນນ

## ການເລີ່ມຕົ້ນທຸລະກິດ

| | 2019 | 2020 | |
|---|---|---|---|
| ອັນດັບ | 180 | 181 | ▼ |
| ຄະແນນ | 60.93 | 62.1 | ▲ |

| | (2019) | (2020) |
|---|---|---|
| ຂັ້ນຕອນ (ຕົວເລກ) | 10 | 9 |
| ໄລຍະເວລາ (ວັນ) | 174 | 173 |
| ຄ່າໃຊ້ຈ່າຍ (%ລາຍໄດ້ຕໍ່ຫົວຄົນ) | 6.6 | 4.6 |
| ການຖອກທຶນຕ່ຳສຸດ | 0.0 | 0.0 |

## ການຂໍອະນຸຍາດປຸກສ້າງ

| | 2019 | 2020 | |
|---|---|---|---|
| ອັນດັບ | 99 | 99 | = |
| ຄະແນນ | 67.94 | 68.3 | ▲ |

| | (2019) | (2020) |
|---|---|---|
| ຂັ້ນຕອນ (ຕົວເລກ) | 12 | 12 |
| ໄລຍະເວລາ (ວັນ) | 92 | 92 |
| ຄ່າໃຊ້ຈ່າຍ (% ມູນຄ່າຂອງສາງ) | 4.9 | 4.6 |
| ດັດຊະນີຄວບຄຸມຄຸນນະພາບການກໍ່ສ້າງ (0-15) | 6.6 | 6.5 |

## ການຂໍຕິດຕັ້ງໄຟຟ້າ

| | 2019 | 2020 | |
|---|---|---|---|
| ອັນດັບ | 156 | 144 | ▲ |
| ຄະແນນ | 52.77 | 58.0 | ▲ |

| | (2019) | (2020) |
|---|---|---|
| ຂັ້ນຕອນ (ຕົວເລກ) | 7 | 7 |
| ໄລຍະເວລາ (ວັນ) | 105 | 87 |
| ຄ່າໃຊ້ຈ່າຍ (% ລາຍໄດ້ຕໍ່ຫົວຄົນ) | 763.4 | 705.2 |
| ດັດຊະນີຄວາມໜ້າເຊື່ອຖື ແລະ ໂປ່ງໃສຂອງລາຄາໄຟຟ້າ (0-8) | 2 | 3 |

## ການຈົດທະບຽນຊັບສິນ

| | 2019 | 2020 | |
|---|---|---|---|
| ອັນດັບ | 85 | 88 | ▼ |
| ຄະແນນ | 64.93 | 64.93 | = |

| | (2019) | (2020) |
|---|---|---|
| ຂັ້ນຕອນ (ຕົວເລກ) | 6 | 6 |
| ໄລຍະເວລາ (ວັນ) | 28 | 28 |
| ຄ່າໃຊ້ຈ່າຍ (% ມູນຄ່າຂອງຊັບສິນ) | 3.1 | 3.1 |
| ດັດຊະນີດ້ານຄຸນນະພາບຂອງການຄຸ້ມຄອງທີ່ດິນ (0-15) | 10.5 | 10.5 |

## ການເຂົ້າເຖິງສິນເຊື່ອ

| | 2019 | 2020 | |
|---|---|---|---|
| ອັນດັບ | 73 | 80 | = |
| ຄະແນນ | 60.0 | 60.0 | ▼ |

| | (2019) | (2020) |
|---|---|---|
| ດັດຊະນີຄວາມເຂັ້ມແຂງຂອງສິດທິທາງກົດໝາຍ (0-12) | 6 | 6 |
| ດັດຊະນີຄວາມເລິກເຊິ່ງຂອງຂໍ້ມູນສິນເຊື່ອ (0-8) | 6 | 6 |
| ການຄອບຄຸມການຈົດທະບຽນສິນເຊື່ອ (% ປະຊາກອນຜູ້ໃຫຍ່) | 14.5 | 19.8 |
| ການຄອບຄຸມຂອງສຳນັກງານສິນເຊື່ອ (% ປະຊາກອນຜູ້ໃຫຍ່) | 0 | 0 |

ອັນດັບ

ຄະແນນ

## ການປົກປ້ອງຜູ້ລົງທຶນລາຍຍ່ອຍ

| | (2019) | (2020) |
|---|---|---|
| ອັນດັບ | 174 | 179 ▼ |
| ຄະແນນ | 31.67 | 20.0 ▼ |

| | (2019) | (2020) |
|---|---|---|
| ດັດຊະນີຂອບເຂດການເປີດເຜີຍຂໍ້ມູນ (0-10) | 6.0 | 6.0 |
| ດັດຊະນີຂອບເຂດຄວາມຮັບຜິດຊອບໜີ້ສິນຂອງຜູ້ອໍານວຍການ (0-10) | 1.0 | 1.0 |
| ດັດຊະນີຄວາມສະດວກການຮ້ອງຟ້ອງຂອງຜູ້ຖືຮຸ້ນ (0-10) | 3.0 | 3.0 |
| ດັດຊະນີຂອບເຂດສິດຂອງຜູ້ຖືຫຸ້ນ (0-6) | 4.0 | 0.0 |
| ດັດຊະນີຂອບເຂດຄວາມເປັນເຈົ້າຂອງ ແລະ ການຄວບຄຸມ (0-7) | 4.0 | 0.0 |
| ດັດຊະນີຂອບເຂດຄວາມໂປ່ງໃສຂອງບໍລິສັດ (0-7) | 1.0 | 0.0 |

## ການຊໍາລະອາກອນ

| | (2019) | (2020) |
|---|---|---|
| ອັນດັບ | 155 | 157 ▼ |
| ຄະແນນ | 54.22 | 54.22 = |

| | (2019) | (2020) |
|---|---|---|
| ການຊໍາລະອາກອນ (ຈໍານວນຄັ້ງຕໍ່ປີ) | 35 | 35 |
| ເວລາ (ຊົ່ວໂມງຕໍ່ປີ) | 362 | 362 |
| ອັດຕາອາກອນ ແລະ ເງິນສົມທົບທັງໝົດ (% ຂອງຜົນກໍາໄລ) | 24.1 | 24.1 |
| ດັດຊະນີຫລັງການແຈ້ງອາການ (0-100) | 18.57 | 18.57 |

## ການຄ້າລະຫວ່າງປະເທດ

| | (2019) | (2020) |
|---|---|---|
| ອັນດັບ | 76 | 78 ▲ |
| ຄະແນນ | 78.12 | 78.12 = |

| ເວລາເພື່ອສົ່ງອອກ | (2019) | (2020) |
|---|---|---|
| ການປະຕິບັດຕາມລະບຽບການດ້ານຊາຍແດນ (ຊົ່ວໂມງ) | 60 | 60 |
| ການປະຕິບັດຄວາມຖືກຕ້ອງດ້ານເອກະສານ(ຊົ່ວໂມງ) | 9 | 9 |
| ຄ່າໃຊ້ຈ່າຍເພື່ອສົ່ງອອກ | | |
| ການປະຕິບັດຕາມລະບຽບການດ້ານຊາຍແດນ (ໂດລາ) | 235 | 235 |
| ການປະຕິບັດຄວາມຖືກຕ້ອງດ້ານເອກະສານ (ໂດລາ) | 140 | 140 |

| ເວລາເພື່ອນໍາເຂົ້າ | (2019) | (2020) |
|---|---|---|
| ການປະຕິບັດຕາມລະບຽບການດ້ານຊາຍແດນ (ຊົ່ວໂມງ) | 60 | 60 |
| ການປະຕິບັດຄວາມຖືກຕ້ອງດ້ານເອກະສານ (ຊົ່ວໂມງ) | 11 | 11 |
| ຄ່າໃຊ້ຈ່າຍເພື່ອນໍາເຂົ້າ | | |
| ການປະຕິບັດຕາມລະບຽບການດ້ານຊາຍແດນ (ໂດລາ) | 115 | 115 |
| ການປະຕິບັດຄວາມຖືກຕ້ອງດ້ານເອກະສານ (ໂດລາ) | 224 | 224 |

## ການບັງຄັບໃຊ້ສັນຍາ

| | (2019) | (2020) |
|---|---|---|
| ອັນດັບ | 162 | 161 ▼ |
| ຄະແນນ | 41.99 | 41.99 = |

| | (2019) | (2020) |
|---|---|---|
| ເວລາ (ວັນ) | 828 | 828 |
| ຄ່າໃຊ້ຈ່າຍ (% ຂອງການຮ້ອງຟ້ອງ) | 31.6 | 31.6 |
| ດັດຊະນີດ້ານຂະບວນຍຸຕິທໍາ (0-18) | 3.5 | 3.5 |

## ການແກ້ໄຂການລົ້ມລະລາຍ

| | (2019) | (2020) |
|---|---|---|
| ອັນດັບ | 168 | 168 = |
| ຄະແນນ | 0.0 | 0.0 = |

| | (2019) | (2020) |
|---|---|---|
| ອັດຕາການກູ້ໜີ້ສິນຄືນໃໝ່ (ເຊັນຕ໌ ຕໍ່ ໂດລາ) | 0 | 0 |
| ເວລາ (ປີ) | ບໍ່ໄດ້ປະຕິບັດ | ບໍ່ໄດ້ປະຕິບັດ |
| ຄ່າໃຊ້ຈ່າຍ (% ຂອງຊັບສິນ) | ບໍ່ໄດ້ປະຕິບັດ | ບໍ່ໄດ້ປະຕິບັດ |
| ຜົນໄດ້ຮັບ (0 ເນື່ອງຈາກທະຍອຍຂາຍ ແລະ ມີຄວາມກັງວົນຕໍ່ເນື່ອງ) | 0 | 0 |
| ດັດຊະນີຄວາມເຂັ້ມແຂງຂອງຂອບນິຕິກໍາດ້ານການລົ້ມລະລາຍ (0-16) | 0 | 0 |

*ທີ່ມາ:* ບົດລາຍງານຄວາມສະດວກໃນການດໍາເນີນທຸລະກິດ ປີ 2019 ແລະ 2020, ທະນາຄານໂລກ

ອີງຕາມ ຕາຕະລາງຂ້າງເທິງ ຕົວຊີ້ວັດທີ 1: ການເລີ່ມຕົ້ນທຸລະກິດ, ຕົວຊີ້ວັດທີ 2: ການຂໍອະນຸຍາດປຸກສ້າງ ແລະ ຕົວຊີ້ວັດທີ 3: ການຂໍຕິດຕັ້ງໄຟຟ້າໄດ້ມີການປ່ຽນແປງທີ່ດີຂຶ້ນສະແດງອອກຈາກຄະແນນໄລຍະຫ່າງຈາກປະເທດທີ່ປະຕິບັດໄດ້ດີທີ່ສຸດເພີ່ມຂຶ້ນ. ການເລີ່ມຕົ້ນທຸລະກິດໄດ້ສໍາເລັດການລຶບລ້າງໜຶ່ງຂັ້ນຕອນ ພ້ອມທັງຫຼຸດຈໍານວນມື້ ແລະ ຄ່າໃຊ້ຈ່າຍ. ແຕ່ໃນຂະນະດຽວກັນ ອັນດັບແມ່ນຫຼຸດລົງເນື່ອງຈາກວ່າປະເທດອື່ນໄດ້ມີການປະຕິຮູບທີ່ມີປະສິດທິຜົນຫຼາຍກວ່າ.

ສໍາລັບການຂໍອະນຸຍາດປຸກສ້າງແມ່ນມີຄ່າໃຊ້ຈ່າຍຫຼຸດລົງເມື່ອທຽບກັບປີຜ່ານມາ, ການຄວບຄຸມຄຸນນະພາບຂອງການກໍ່ສ້າງໄດ້ຮັບຄະແນນຫຼຸດລົງ. ດັ່ງນັ້ນ, ຄະແນນໄລຍະຫ່າງຈາກປະເທດທີ່ປະຕິບັດໄດ້ດີທີ່ສຸດຂອງຕົວຊີ້ວັດນີ້ ແມ່ນເຫັນໄດ້ວ່າເພີ່ມຂຶ້ນເລັກນ້ອຍ, ໃນຂະນະທີ່ການຈັດອັນດັບຍັງບໍ່ມີການປ່ຽນແປງ.

ການຂໍຕິດຕັ້ງໄຟຟ້າ ໄດ້ຫຼຸດອັນດັບແບບກ້າວກະໂດດ ຈາກອັນດັບທີ 156 ມາເປັນອັນດັບທີ 144 ເນື່ອງຈາກສາມາດຫຼຸດເວລາ ແລະ ຄ່າໃຊ້ຈ່າຍໃນການລົງທະບຽນໄຟຟ້າໄດ້ຢ່າງຫຼວງຫຼາຍ. ເຖິງຢ່າງໃດກໍ່ຕາມ, ການຫຼຸດອັນດັບຂອງຕົວຊີ້ວັດດັ່ງກ່າວບໍ່ໄດ້ສົ່ງຜົນກະທົບຫຼາຍຕໍ່ການປ່ຽນແປງຂອງອັນດັບລວມ.

ໂດຍລວມແລ້ວ, ວຽກງານການປັບປຸງຄວາມສະດວກໃນການດໍາເນີນທຸລະກິດຂອງ ສປປ ລາວ ຍັງເຫັນວ່າເປັນສິ່ງທ້າທາຍຢູ່ ແລະ ຍັງບໍ່ສາມາດຫຼຸດອັນດັບເປັນ 2 ໂຕເລກຕາມຄາດໝາຍທີ່ວາງໄວ້ ເນື່ອງຈາກວ່າຂະແໜງການຮັບຜິດຊອບປັບປຸງທັງ 10 ຕົວຊີ້ວັດຍັງຂາດແຜນດໍາເນີນງານທີ່ເໝາະສົມ, ບໍ່ທັນສອດຄ່ອງກັບການສໍາຫຼວດຂອງທະນາຄານໂລກ ແລະ ຍັງບໍ່ທັນກໍານົດໄລຍະເວລາຈັດຕັ້ງປະຕິບັດທີ່ເປັນຈິງໄດ້. ນອກຈາກນັ້ນ, ການຂາດແຄນທາງດ້ານງົບປະມານກໍ່ເປັນປັດໃຈສໍາຄັນອັນໜຶ່ງທີ່ເປັນອຸປະສັກຕໍ່ການຈັດຕັ້ງປະຕິບັດບັນດາກິດຈະກໍາການປັບປຸງຕ່າງໆ ສົ່ງຜົນກະທົບໃຫ້ຄະແນນ ແລະ ອັນດັບຂອງຕົວຊີ້ວັດຫຼຸດລົງ.



# ກ່ຽວກັບແຜນດຳເນີນງານ

ກົມສົ່ງເສີມການລົງທຶນ, ກະຊວງ ແຜນການ ແລະ ການລົງທຶນ ໄດ້ປະສານກັບຂະແໜງການກ່ຽວຂ້ອງທັງ 10 ຕົວຊີ້ວັດ ໃນການກຳນົດແຜນດຳເນີນງານການປະຕິຮູບຕາມຂອບເຂດສິດ ແລະ ໜ້າທີ່ໃນຄວາມຮັບຜິດຊອບຂອງຕົນເພື່ອພັດທະນາເປັນເຄື່ອງມືໃນການຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຄຳສັ່ງເລກທີ 02/ນຍ ໃຫ້ສາມາດບັນລຸເປົ້າໝາຍທີ່ວາງໄວ້.

ແຜນດຳເນີນງານໄດ້ສະແດງໃຫ້ເຫັນບັນດາກິດຈະກຳທີ່ຈະຕ້ອງປະຕິບັດໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ໂດຍກຳນົດບູລິມະສິດການປັບປຸງທີ່ເຫັນວ່າມີຜົນກະທົບໂດຍກົງ ແລະ ທັນທີຕໍ່ອັນດັບຄວາມສະດວກໃນການດຳເນີນທຸລະກິດບົນພື້ນຖານຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້.

### ແຜນດຳເນີນງານ ມີຈຸດປະສົງຕົ້ນຕໍດັ່ງນີ້:



# ແຜນດຳເນີນງານ
# 2020-2022



# ການເລີ່ມຕົ້ນທຸລະກິດ

9
ຂັ້ນຕອນ
174 ມື້

9
ຂັ້ນຕອນ
6-8 ມື້



| ກິດຈະກໍາ | ກິດຈະກໍາຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ສ້າງລະບົບການຈົດທະບຽນວິສາຫະກິດແບບເອເລັກໂຕຼນິກ ຫຼື ແບບອອນລາຍ | 1. ສຶກສາບົດຮຽນລະບົບການຈົດທະບຽນແບບເອເລັກໂຕຼນິກ ຫຼື ແບບອອນລາຍຂອງຕ່າງປະເທດ | Q1 | | | LCT Project |
| | 2. ຮ່າງຂອບເຂດການເຮັດວຽກ (TOR) | Q2 | | | |
| | 3. ຈັດຊື້ຈັດຈ້າງບໍລິສັດຊ່ຽວຊານຕ່າງປະເທດ | Q2-3 | | | |
| | 4. ຮ່ວມເຮັດວຽກກັບບໍລິສັດຊ່ຽວຊານຕ່າງປະເທດ ເພື່ອອອກແບບແຜນວາດ/ໂຄງສ້າງຂອງລະບົບ | Q4 | | | |
| | 5. ສໍາເລັດການອອກແບບແຜນວາດ/ໂຄງສ້າງຂອງລະບົບເບື້ອງຕົ້ນ | | Q1 | | |
| | 6. ຈັດກອງປະຊຸມປຶກສາຫາລືກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແລກປ່ຽນຄວາມຄິດເຫັນກ່ຽວກັບແຜນວາດ/ໂຄງສ້າງດັ່ງກ່າວ | | Q2 | | |
| | 7. ປັບປຸງແຜນວາດ/ໂຄງສ້າງຂອງລະບົບຕາມຄໍາເຫັນຂອງກອງປະຊຸມ | | Q2 | | |
| | 8. ສະເໜີແຜນວາດ/ໂຄງສ້າງຂອງລະບົບຜ່ານຄະນະນໍາກະຊວງ ອຄ ເພື່ອຂໍທິດຊີ້ນໍາ | | Q2 | | |
| | 9. ພັດທະນາລະບົບ ແລະ ທົດສອບການນໍາໃຊ້ລະບົບ | | Q3-4 | | |
| | 10. ສໍາເລັດການສ້າງລະບົບ ແລະ ຈັດກອງປະຊຸມຝຶກອົບຮົມການນໍາໃຊ້ລະບົບໃຫ້ແກ່ເຈົ້າໜ້າທີ່ທະບຽນ | | Q4 | Q1 | |
| | 11. ເປີດການນໍາໃຊ້ລະບົບຢ່າງເປັນທາງການ | | Q1 | | |
| | 12. ເຜີຍແຜ່ການນໍາໃຊ້ລະບົບໃຫ້ແກ່ພາກລັດ ແລະ ເອກະຊົນຂັ້ນທ້ອງຖິ່ນ | | Q2-4 | | |
| ແກ້ໄຂເລື່ອງການກວດສອບປະຫວັດຜູ້ລົງທຶນຕ່າງປະເທດ | 1. ກະຊວງ ປກສ ອອກນິຕິກໍາ ແນະນໍາການຈັດຕັ້ງປະຕິບັດໃຫ້ເປັນເອກະພາບທົ່ວປະເທດ | Q1 | | | ບໍ່ມີ |

**Q1** Jan-Mar **Q2** Apr-Jun **Q3** Jul-Sep **Q4** Oct-Dec

| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ຫັນເລກປະຈຳຕົວຜູ້ເສຍອາກອນ ແລະ ລະຫັດວິສາຫະກິດ ເປັນຕົວເລກດຽວກັນ | 1. ຈັດກອງປະຊຸມປຶກສາຫາລືຮ່ວມກັບກົມສ່ວຍສາອາກອນ, ກະຊວງ ກງ ກ່ຽວກັບການຫັນເລກປະຈຳຕົວຜູ້ເສຍອາກອນ ແລະ ລະຫັດວິສາຫະກິດເປັນຕົວເລກດຽວກັນ ຕາມມາດຖານສາກົນ | Q1 | | | ບໍ່ມີ |
| | 2. ປັບປຸງ ໂປຣແກຣມທະບຽນ (ERS) ແລະ ອາກອນ (TaxRis) | Q2-3 | | | |
| | 3. ອອກນິຕິກຳ ແນະນຳການຈັດຕັ້ງປະຕິບັດໃຫ້ເປັນເອກະພາບທົ່ວປະເທດ | Q4 | | | |
| ປັບປຸງກົດໝາຍວ່າດ້ວຍວິສາຫະກິດ | 1. ສ້າງຕັ້ງຄະນະຮັບຜິດຊອບປັບປຸງກົດໝາຍ | | | | LCT Project |
| | 2. ສັງລວມຂໍ້ມູນນິຕິກຳທີ່ຕິດພັນກັບການປັບປຸງກົດໝາຍ | | | | |
| | 3. ຈັດກອງປະຊຸມຄະນະຮັບຜິດຊອບຄົ້ນຄວ້າປັບປຸງກົດໝາຍ | Q1 | | | |
| | 4. ດຳເນີນການຄົ້ນຄວ້າ ແລະ ປັບປຸງກົດໝາຍ | Q1 | | | |
| | 5. ສົ່ງຮ່າງກົດໝາຍສະບັບປັບປຸງໃຫ້ຂະແໜງການຕ່າງໆທີ່ກ່ຽວຂ້ອງ ເພື່ອປະກອບຄຳຄິດເຫັນ | Q1 | | | |
| | 6. ຈັດກອງປະຊຸມກັບຂະແໜງການທີ່ກ່ຽວຂ້ອງ ລວມທັງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (ຕາງໜ້າພາກທຸລະກິດ) ເພື່ອປຶກສາຫາລືກ່ຽວກັບຮ່າງກົດໝາຍ | Q1 | | | |
| | 7. ດຳເນີນການປັບປຸງຮ່າງກົດໝາຍ ຕາມຄຳເຫັນຂອງກອງປະຊຸມ ແລະ ສ້າງບົດສະເໜີ ແລະ ບົດປະເມີນຜົນກະທົບຂອງຮ່າງກົດໝາຍ | Q1 | | | |
| | 8. ຈັດກອງປະຊຸມທາບທາມຄຳເຫັນຕໍ່ຮ່າງກົດໝາຍຢູ່ ພາກກາງ, ພາກເໜືອ ແລະ ພາກໃຕ້ | Q1 | | | |
| | 9. ຈັດກອງປະຊຸມເປີດກວ້າງລະດົມຄຳຄິດເຫັນພາກລັດ ແລະ ເອກະຊົນ | Q2 | | | |
| | 10. ເອົາຮ່າງກົດໝາຍສະບັບປັບປຸງ ພ້ອມທັງ ບົດສະເໜີ ແລະ ບົດປະເມີນຜົນກະທົບລົງເວັບໄຊ ເພື່ອລະດົມຄຳຄິດເຫັນ | Q1 | | | |
| | 11. ຈັດກອງປະຊຸມຄະນະຊີ້ນຳລວມ ເພື່ອເປັນເອກະພາບດ້ານເນື້ອໃນ ແລະ ຮຽບຮຽງຄືນຮ່າງກົດໝາຍສະບັບປັບປຸງ ກ່ອນສົ່ງໃຫ້ກະຊວງຍຸຕິທຳ | Q2 | | | |
| | 12. ສົ່ງຮ່າງກົດໝາຍສະບັບປັບປຸງພ້ອມທັງບົດສະເໜີ ແລະ ບົດປະເມີນຜົນກະທົບ ໃຫ້ກະຊວງຍຸຕິທຳ | Q2 | | | |

| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| | 13. ຈັດກອງປະຊຸມປຶກສາຫາລືກັບກະຊວງຍຸຕິທຳເພື່ອກວດກາຄວາມສອດຄ່ອງຂອງຮ່າງກົດໝາຍ | Q2 | | | |
| | 14. ຈັດກອງປະຊຸມສຳມະນາຮ່ວມກັບສະມາຊິກລັດຖະບານ (ຜູ້ຮັບຜິດຊອບ) ກ່ອນສະເໜີຜ່ານກອງປະຊຸມລັດຖະບານ | Q2 | | | |
| | 15. ສະເໜີຮ່າງກົດໝາຍຜ່ານກອງປະຊຸມລັດຖະບານ | Q3 | | | |
| | 16. ປັບປຸງຮ່າງກົດໝາຍ ພາຍຫຼັງກອງປະຊຸມລັດຖະບານ ໂດຍຮ່ວມກັບກະຊວງຍຸຕິທຳ | Q3 | | | |
| | 17. ສົ່ງຮ່າງກົດໝາຍ ພ້ອມທັງບົດສະເໜີ ໃຫ້ສະພາແຫ່ງຊາດ | Q3 | | | |
| | 18. ຈັດກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍສະບັບປັບປຸງ ຮ່ວມກັບສະພາແຫ່ງຊາດ | Q3 | | | |
| | 19. ປັບປຸງຕາມຄຳເຫັນຂອງກອງປະຊຸມ ຮ່ວມກັບຄະນະຮັບຜິດຊອບຂອງສະພາແຫ່ງຊາດ ແລ້ວລາຍງານຄະນະປະຈຳສະພາແຫ່ງຊາດ | Q4 | | | |
| | 20. ຈັດກອງປະຊຸມເປີດກວ້າງ ໃຫ້ສະມາຊິກສະພາແຫ່ງຊາດ (ກໍລະນີ ຄະນະປະຈຳສະພາແຫ່ງຊາດມີຄຳເຫັນໃຫ້ຈັດ) | Q4 | | | |
| | 21. ຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ກິດຈະກຳຍ່ອຍ | Q4 | | | |
| | 22. ຮ່ວມເຮັດວຽກກັບຄະນະປະຈຳສະພາແຫ່ງຊາດ ເພື່ອກວດກາເນື້ອໃນກ່ອນເຂົ້າວາລະກອງປະຊຸມສະພາແຫ່ງຊາດ | Q4 | | | |
| | 23. ສະພາແຫ່ງຊາດອອກມະຕິຕົກລົງຮັບຮອງ | Q4 | | | |
| | 24. ປະທານປະເທດອອກລັດຖະດຳລັດປະກາດໃຊ້ | | Q1 | | |
| | 25. ລົງຈົດໝາຍເຫດທາງລັດຖະການນຳກະຊວງຍຸຕິທຳ | | Q1 | | |

| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ຍົກເລີກຂັ້ນຕອນ ການຈົດທະບຽນ ກິດລະບຽບບໍລິສັດ | 1. ປຶກສາຫາລືຮ່ວມກັບກົມຊັບສິນຂອງລັດ, ກະຊວງ ກງ ກ່ຽວກັບການຍົກເລີກຂັ້ນຕອນການຈົດທະບຽນ ກົດລະບຽບບໍລິສັດ | Q1-2 | | | ບໍ່ມີ |
| ປັບປຸງວຽກງານຄວັດຕາປະທັບ ຕາມມາດຕາ 21 ຂອງກົດໝາຍ ວ່າດ້ວຍວິສາຫະກິດ (ສະບັບປັບປຸງ) | 1. ປະສານກັບຂະແໜງ ປກສ ອອກແຈ້ງການ/ນິຕິກຳທີ່ຊັດເຈນຂອງຂະແໜງການຕົນ ເພື່ອຜັນຂະຫຍາຍແຈ້ງການ ສະບັບເລກທີ 2140/ຫອຄ. ກທຄວ, ລົງວັນທີ 03 ຕຸລາ 2019 ກ່ຽວກັບການຄວັດຕາປະທັບ ໂດຍໃຫ້ການຄວັດຕາປະທັບ ແລະ ການຈົດທະບຽນນຳໃຊ້ຕາປະທັບ ເປັນຂອດດຽວ ສາມາດອອກພ້ອມກັນໃນເວລາ ຫ້າ ວັນລັດຖະການ | | | | ບໍ່ມີ |
| | 2. ປະສານກັບຂະແໜງ ປກສ ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດ ແຈ້ງການ/ນິຕິກຳທີ່ກ່ຽວຂ້ອງ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ | Q1 | | | |
| ຍົກເລີກ ການຂໍອະນຸຍາດ ເນື້ອໃນປ້າຍວິສາຫະກິດ | 1. ປະສານກັບຂະແໜງ ຖວທ ອອກແຈ້ງການ/ນິຕິກຳທີ່ຊັດເຈນຂອງຂະແໜງການຕົນ ເພື່ອຜັນຂະຫຍາຍ ແຈ້ງການ ສະບັບເລກທີ 2823/ຫອຄ. ກທຄວ, ລົງວັນທີ 26 ພະຈິກ 2018 ກ່ຽວກັບການລຶບລ້າງການ ອອກອະນຸຍາດເນື້ອໃນປ້າຍຊື່ວິສາຫະກິດ | | | | ບໍ່ມີ |
| | 2. ປະສານກັບຂະແໜງ ຖວທ ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດແຈ້ງການ/ນິຕິກຳທີ່ກ່ຽວຂ້ອງ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ | Q1 | | | |
| ປັບປຸງການອອກໃບຢັ້ງຢືນປະກັນສັງຄົມໃຫ້ໄວຂຶ້ນ | 1. ຈັດກອງປະຊຸມປຶກສາຫາລືຮ່ວມກັບຫ້ອງການປະກັນສັງຄົມ, ກະຊວງ ຮສສ ກ່ຽວກັບການສ້າງລະບົບ ເຊື່ອມຕໍ່ ລະຫວ່າງ ຂະແໜງ ອຄ ແລະ ຂະແໜງ ຮສສ ໃນການອອກໃບຢັ້ງຢືນປະກັນສັງຄົມໃຫ້ແກ່ ວິສາຫະກິດ | Q1 | | | ບໍ່ມີ |
| | 2. ສ້າງ USER ເພື່ອນຳໃຊ້ລະບົບເຊື່ອມຕໍ່ຂໍ້ມູນວິສາຫະກິດ | Q2-3 | | | |
| | 3. ເຮັດບົດບັນທຶກຮ່ວມກັນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ | Q4 | | | |

# ການຂໍອະນຸຍາດປຸກສ້າງ

12
ຂັ້ນຕອນ
92 ມື້

ດັດຊະນີຄວບຄຸມຄຸນນະພາບຂອງການກໍ່ສ້າງ
(6.5 - 15)

6
ຂັ້ນຕອນ
62 ມື້

ດັດຊະນີຄວບຄຸມຄຸນນະພາບຂອງການກໍ່ສ້າງ
(9.5 - 15)



| ກິດຈະກໍາ | ກິດຈະກໍາຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ສ້າງລະບົບເອເລັກໂຕຣນິກ ໃນການຮັບຄໍາຮ້ອງ ແລະ ອອກອະນຸຍາດອອນລາຍ | 1. ສໍາຫລວດເກັບກໍາຂໍ້ມູນ ແລະ ອອກແບບລະບົບ | Q3–4 | | | ບໍ່ມີ |
| | 2. ຮ່ວມກັບຜູ້ອອກແບບເພື່ອສັງລວມບັນດາ ຊອບແວທີ່ນໍາໃຊ້ອອກແບບ ແລະ ຮ່ວມກັບອົງການໂທລະຄົມເພື່ອສ້າງລະບົບ ແລະ ທົດສອບ | | Q1-2 | | |
| | 3. ຝຶກອົບຮົມ ແລະ ເຜີຍແຜ່ການນໍາໃຊ້ລະບົບໃຫ້ພະນັກງານທີ່ກ່ຽວຂ້ອງ ແລະ ພາກເອກະຊົນ | | Q2 | | |
| ເພີ່ມລະດັບຄວາມເຂົ້າໃຈຕໍ່ລະບຽບການກໍ່ສ້າງໃຫ້ທົ່ວເຖິງ | 1. ຈັດກອງປະຊຸມເຜີຍແຜ່ວຽກງານປຸກສ້າງ ທີ່ນະຄອນຫລວງວຽງຈັນ ກັບ ບັນດາພາກລັດ ແລະ ຫົວໜ່ວຍທຸລະກິດ ເພື່ອແນະນໍາການຈັດຕັ້ງປະຕິບັດ | Q1-2 | | | ບໍ່ມີ |
| | 2. ສືບຕໍ່ຈັດກອງປະຊຸມຖອດຖອນບົດຮຽນທົ່ວປະເທດ ທີ່ນະຄອນຫລວງວຽງຈັນ ເພື່ອແນະນໍາການຈັດຕັ້ງປະຕິບັດ ແລະ ການເກັບຄ່າທໍານຽມອະນຸຍາດປຸກສ້າງ | Q1-4 | | | |
| | 3. ສືບຕໍ່ຈັດກອງປະຊຸມປະສານງານກັບພາກສ່ວນຕ່າງໆ ເຊັ່ນ: ລັດວິສາຫະກິດ ໄຟຟ້າ, ນໍ້າປະປາ ແລະ ຂະແໜງການກ່ຽວຂ້ອງ ເພື່ອສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ້ການປຸກສ້າງ | Q2-4 | | | |
| ປັບປຸງກົນໄກເພື່ອໃຫ້ ສະຖາປານິກ ແລະ ວິສະວະກອນ ທີ່ມີຄວາມຊໍານານງານ ແລະ ໄດ້ຮັບການຢັ້ງຢືນຈາກສະພາສະຖາປານິກ ແລະ ວິສະວະກອນ ໂຍທາລາວ | 1. ປັບປຸງລະບຽບ ການສໍາຫລວດອອກແບບ, ການຄຸ້ມຄອງການກໍ່ສ້າງ, ການຄວບຄຸມອາຄານ ແລະ ກົດໝາຍວ່າດ້ວຍການກໍ່ສ້າງ | Q1-4 | Q1-2 | | ບໍ່ມີ |
| | 2. ກໍານົດມາດຖານ ແລະ ດໍາເນີນການສອບເສັງເພື່ອກໍານົດລະດັບ ຄວາມຊໍານານງານ ຂອງ ສະຖາປານິກ ແລະ ວິສະວະກອນ | Q1-4 | Q1-2 | | |
| ສ້າງຂອບນິຕິກໍາ ການປະກັນໄພການກໍ່ສ້າງ | 1. ຈັດກອງປະຊຸມລະຫວ່າງ ຍທຂ, ການເງິນ, ຍຸຕິທໍາ ແລະ ປະກັນໄພ ເພື່ອກວດຄືນເບິ່ງວ່າມີຄວາມຈໍາເປັນຕ້ອງມີນິຕິກໍາເພີ່ມຫຍັງແດ່ເພີ່ມເຕີມ | Q1-4 | Q1-2 | | ບໍ່ມີ |
| | 2. ມອບໝາຍ ໜ້າທີ່ໃຫ້ການຈັດຕັ້ງຮັບຜິດຊອບສ້າງນິຕິກໍາ, ຖ້າເຫັນວ່າຈໍາເປັນ. | Q1-4 | Q1-2 | | |
| ສ້າງຕັ້ງສະພາ ສະຖາປານິກ ແລະ ວິສະວະກອນ ໂຍທາລາວ ເພື່ອຢັ້ງຢືນຄວາມຊໍານານງານດ້ານວິຊາຊີບ | 1. ຖອດຖອນບົດຮຽນກັບສາກົນ | Q1 | | | ບໍ່ມີ |
| | 2. ສ້າງກົນໄກ ແລະວາງມາດຖານລະດັບຄວາມຊໍານານງານຂອງສະຖາປານິກ ແລະ ວິສະວະກອນ | Q1-4 | | | |
| | 3. ດໍາເນີນການສອບເສັງເພື່ອວັດແທກລະດັບຄວາມຊໍານານງານ | | Q1-2 | | |
| ສ້າງຫລັກສູດ ແລະ ຈັດຝຶກອົບຮົມກ່ຽວກັບວຽກງານປຸກສ້າງໃຫ້ແກ່ພະນັກງານທີ່ຈະລົງກວດພາກສະຫນາມ | 1. ຄົ້ນຄວ້າສ້າງຫລັກສູດຝຶກອົບຮົມກ່ຽວກັບວຽກງານປຸກສ້າງ | | | | ບໍ່ມີ |
| | 2. ຈັດຝຶກອົບຮົບມາດຖານໃຫ້ແກ່ ພະນັກງານກ່ຽວຂ້ອງ ປະຈໍາແຂວງ ແລະ ເມືອງ ແລ້ວສອບເສັງວັດລະດັບຄວາມຊໍານານງານເພື່ອດໍາເນີນໜ້າທີ່ | Q2, Q4 | Q4 | | |

# ການຂໍຕິດຕັ້ງໄຟຟ້າ

7
ຂັ້ນຕອນ
88 ມື້

ດັດຊະນີຄວາມຫນ້າເຊື່ອຖືຂອງການສະຫນອງ ແລະ ຄວາມໂປ່ງໃສຂອງ ລາຄາໄຟຟ້າ (3 - 8)

3
ຂັ້ນຕອນ
27 ມື້

ດັດຊະນີຄວາມຫນ້າເຊື່ອຖືຂອງການສະຫນອງ ແລະ ຄວາມໂປ່ງໃສຂອງ ລາຄາໄຟຟ້າ (4.2 - 8)

## ELECTRICIAN SERVICES



| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ລວມ ສົ່ງໃບຄຳຮ້ອງ (ເຖິງ EDL ແລະ ລໍຖ້າການລົງມາກວດສະຖານທີ່) ແລະ ຮັບການກວດກາສະຖານທີ່ໂດຍ EDL ແລະ ລໍຖ້າການປະເມີນ ແລະ ການກຳນົດດ້ານເຕັກນິກ ເຂົ້າເປັນຂັ້ນຕອນດຽວ | ອີງຕາມຂໍ້ກຳນົດຂອງ ຟຟລ ເລກທີ່ 863/ຟຟລ.ນວ ລົງວັນທີ 7 ກັນຍາ 2019 | Q1 | | | |
| ການສ້າງເຂົ້າໃຈໃຫ້ຜູ້ປະກອບການ ແລະ ລູກຄ້າໃຫ້ເຂົ້າໃຈລະບຽບການ ແລະ ຂັ້ນຕອນການຂໍຕິດຕັ້ງໄຟຟ້າ | 1. ຈັດກອງປະຊຸມເຜີຍແຜ່ໃຫ້ຜູ້ປະກອບການ, ຜູ້ຊົມໃຊ້ໄຟຟ້າເຂົ້າໃຈເຖິງຂັ້ນຕອນ ແລະ ຄວາມຮັບຜິດຊອບຂອງຕົນ ພ້ອມທັງເຜີຍແຜ່ອອນລາຍ ໃນທຸກໜ້າວຽກ | Q1-4 | Q1-4 | Q1-4 | ບໍ່ມີ |
| | 2. ຈັດປະຊຸມຮ່ວມກັບກະຊວງ ພບ ໃນການຄຸ້ມຄອງຜູ້ປະກອບການໄຟຟ້າໃຫ້ຈັດຕັ້ງປະຕິບັດຕາມລະບຽບການທີ່ວາງອອກ, ຖ້າລະເມີດຈະມີຜົນກ່ຽວກັບການຕໍ່ທະບຽນທຸລະກິດປະຈຳປີ | Q1-4 | Q1-4 | Q1-4 | |
| | 3. ເຜີຍແຜ່ລະບຽບການ ຜ່ານສື່ຂອງໄຟຟ້າລາວ "ໄຟຟ້າລາວເພື່ອການພັດທະນາ" ແລະ ສື່ອື່ນໆ | | | | |
| ສ້າງ ແອັບພິເຄຊັນດ້ານການບໍລິການຂໍຕິດຕັ້ງໄຟຟ້າ | 1. ສ້າງແຜນ ແລະ ຂໍທິດຈາກຂັ້ນເທິງໃນວຽກງານດ້ານບໍລິການດ້ວຍລະບົບ ຄອມພິວເຕີ | Q1-2 | | | ບໍ່ມີ |
| | 2. ຕັ້ງທີມງານຮັບຜິດຊອບພັດທະນາແອັບພິເຄຊັນ ໂດຍຮ່ວມມືກັບພາກສ່ວນພາຍນອກ | Q3-4 | Q1-4 | Q1-4 | |
| ສົ່ງເສີມການຈັດຕັ້ງປະຕິບັດ "ກວດກາການສົ່ງກະແສໄຟຟ້າໂດຍ EDL" | 1. ສະເໜີໃຫ້ກະຊວງຮັບຮອງລະບຽບການໃນການຈັດຕັ້ງປະຕິບັດ ໃນການກຳນົດຄ່າຕົວຊີ້ວັດຄຸນນະພາບໄຟຟ້າ, ດ້ານການກວດກາຕິດຕາມການບໍລິການຕິດຕັ້ງໄຟຟ້າ ຈາກ ຟຟລ ແລະ ຜູ້ປະກອບການ | | | | ບໍ່ມີ |
| | 2. ພັດທະນາກົນໄກຕິດຕາມ ກວດກາການເຮັດວຽກຂອງສາຂາໃຫ້ເປັນລະບົບເອເລັກໂຕຣນິກ | Q1-4 | Q1-2 | | |
| ສ້າງຖານຂໍ້ມູນໃນການຄິດໄລ່ ແລະ ໃຫ້ສາມາດສະແດງເທິງເວັບໄຊຂອງ ຟຟລ ໄດ້ | 1. ສ້າງລະບົບຖານຂໍ້ມູນໂດຍຈະຄິດໄລ່ ແລະ ສາມາດກວດກາຄວາມຕ້ອງໄດ້ຈາກສູນບໍລິການຈົນຮອດສາຂາ | Q1 | | | ບໍ່ມີ |
| | 2. ຈັດລຳດັບສຳຄັນ ຂອງການບໍລິການ ຂອງແຕ່ລະສາຂາ ພ້ອມທັງໃຫ້ມີທີມງານປະເມີນຜົນໄດ້ຮັບເປັນໄລຍະ | Q1-2 | | | |
| | 3. ຈັດການແຂ່ງຂັນດ້ານການບໍລິການໂດຍໃຫ້ລາງວັນຕໍ່ກັບສາຂາ ຫຼື ສູນບໍລິການທີ່ເຫັນວ່າປະຕິບັດ ໄດ້ໄວ ຫຼື SAIFI, SAIDI ຕໍ່າ | Q2 | Q3 | Q3 | |

| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| 2 ໂຄງການສ້າງລະບົບອັດຕະໂນມັດ ສຳລັບສາຂາ 4 ຕົວເມືອງ ແລະ ສາຂາໄຊທານີ | 1. ສ້າງລະບົບ SCADA ພາກແຮງກາງ, ໝໍ້ແປງ ແລະ ພາກແຮງຕໍ່າໃນການ ບັນທຶກເຫດການ ໄຟຕົກ, ໄຟມອດພ້ອມທັງສາມາດແກ້ໄຂລະບົບໂດຍອັດຕະໂນມັດພ້ອມນັ້ນແມ່ນມີການນຳໃຊ້ລະບົບ ໝໍ້ນັບໄຟທີ່ທັນສະໄໝ | Q1 | Q1 | Q1 | ບໍ່ມີ |
| ໃຫ້ພາກສ່ວນອື່ນ ເປັນຜູ້ກຳນົດຄ່າຄວາມຫນ້າເຊື່ອຖື | ສະເໜີໃຫ້ກະຊວງພະລັງງານ ແຕ່ງຕັ້ງໃຫ້ກົມ ທີ່ຂຶ້ນກັບ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ກຳນົດຄ່າຄວາມໜ້າເຊື່ອຖື ໃນແຕ່ລະປີ | Q1-4 | | | |
| ສ້າງລະບຽບການໃຫ້ລູກຄ້າສາມາດ ເລືອກເຮັດສັນຍາກັບ ຟຟລ ເພື່ອໄດ້ ຮັບການຊົດເຊີຍຈາກກໍລະນີໄຟຕົກ ຫລື ໄຟມອດ | 1. ຈັດປະຊຸມກັບພາກສ່ວນທີ່ກ່ຽວຂ້ອງເພື່ອຂໍທິດຊີ້ນຳ ແລະ ເຫັນດີສ້າງລະບຽບການ ການຊົດເຊີຍ ຜົນກະທົບຈາກໄຟຕົກ ຫລື ໄຟມອດ | Q2 | | | ບໍ່ມີ |
| | 2. ສ້າງລະບຽບການໂດຍມີການກຳນົດພັນທະຂອງ ລູກຄ້າ ແລະ ຟຟລ ຢ່າງຈະແຈ້ງ | Q4 | | | |
| ປັບປຸງດ້ານ ລາຄາ ຂອງການບໍລິການ | 1. ຮ່າງຂໍ້ກຳນົດລາຄາກາງໃນພາກ ແຮງກາງ ແລະ ແຮງຕໍ່າ | Q1-4 | | | ບໍ່ມີ |
| | 2. ຮັບຮອງຂໍ້ກຳນົດລາຄາກາງໃນພາກ ແຮງກາງ ແລະ ແຮງຕໍ່າ | Q2-4 | | | |
| ການກວດກາການຈັດຕັ້ງປະຕິບັດ | ກົມຄຸ້ມຄອງພະລັງງານ, ກົມນະໂຍບາຍແລະ ແຜນພະລັງງານ ແລະ ຟຟລ ລົງປະເມີນຜົນການຈັດຕັ້ງປະຕິບັດຂອງການຈັດຕັ້ງປະຕິບັດຂອງທຸກຂະແໜງການບໍລິການໄຟຟ້າ ໃນລາວ | Q1, Q4 | Q4 | | ບໍ່ມີ |

# ການຈົດທະບຽນຊັບສິນ

6
ຂັ້ນຕອນ
28 ມື້

ດັດຊະນີມາດຕະຖານການຄຸ້ມຄອງທີ່ດິນ
(10.5 - 30)

6
ຂັ້ນຕອນ
18.5 ມື້

ດັດຊະນີມາດຕະຖານການຄຸ້ມຄອງທີ່ດິນ
(19.5 - 30)



| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ເພີ່ມຊ່ອງທາງໃນການເຂົ້າເຖິງແບບຟອມ | ກຳລັງຮ່າງແຈ້ງການປະກາດໃຊ້ | Q1 | | | |
| ຊຸກຍູ້ປະຕິບັດຕາມຂໍ້ຕົກລົງ ເລກທີ 6580/ກຊສ, ວັນທີ 15 ກັນຍາ 2014 | ກົມທີ່ດິນ ລົງຊຸກຍູ້, ຕິດຕາມ - ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດມາດຖານດ້ານການບໍລິການ ຢູ່ ພຊສ ແລະ ຫຊສ | Q1, Q3 | Q1 | | ບໍ່ມີ |
| ປັບປຸງຂັ້ນຕອນການຈັດຕັ້ງປະຕິບັດ | 1. ສ້າງຄຳແນະນຳວ່າດ້ວຍການຈົດທະບຽນຊັບສິນ | Q1-3 | | | LCT |
| | 2. ສ້າງຄຳແນະນຳວ່າດ້ວຍການຫັນປ່ຽນຂໍ້ມູນທີ່ດິນ ຈາກລະບົບເຈ້ຍໃຫ້ເປັນດິຈິຕອນ | | | | |
| | 3. ປະກາດແຈ້ງການໃຫ້ສາທາລະນະຊົນຮັບຮູ້ | Q4 | Q1-2 | | |
| ປັບປຸງພາລະບົດບາດ ແລະ ໂຄງສ້າງໃໝ່ | 1. ປັບປຸງພາລະບົດບາດ ແລະ ໂຄງສ້າງໃໝ່ຂອງຂະແໜງທີ່ດິນ | | | | |
| | 2. ປັບປຸງພາລະບົດບາດ ແລະ ໂຄງສ້າງໃໝ່ຂອງສູນບໍລິການທີ່ດິນ | | | | |
| ພັດທະນາລະບົບ ແລະ ສ້າງຖານຂໍ້ມູນຮູບແບບດິຈິຕອນ | 1. ຂຽນ ToR | | | | |
| | 2. ຈ້າງບໍລິສັດ IT ຂຽນໂປຣແກຣມ | Q1-3 | | | |
| | 3. ຈ້າງບໍລິສັດ IT ຫັນປ່ຽນຂໍ້ມູນຕອນດິນຈາກລະບົບເຈ້ຍໃຫ້ເປັນດິຈິຕອນ | Q1-3 | | | |
| ຈັດຕັ້ງປະຕິບັດລະບົບ ແລະ ຖານຂໍ້ມູນຮູບແບບດິຈິຕອນ | 1. ຝຶກອົບຮົມໃຫ້ ພງ ສູນກາງ ແລະ ທ້ອງຖິ່ນ | Q4 | | | |
| | 2. ໃຫ້ບໍລິການທາງອອນລາຍ | | Q1-2 | | |
| ສ້າງ ແລະ ເພີ່ມການນຳໃຊ້ຮູບແບບດິຈິຕອນໃນການເກັບຮັກສາເອກະສານ | 1. ປັບປຸງລະບົບດິຈິຕອນໃນການເກັບຮັກສາເອກະສານ | | | | GIZ-LMPD |
| | 2. ເພີ່ມການນຳໃຊ້ຮູບແບບດິຈິຕອນໃນການເກັບຮັກສາເອກະສານໃຫ້ທົ່ວເຖິງ | Q1-4 | Q1-2 | | Environmental Protection Fund |
| ແລກປ່ຽນຂໍ້ມູນຜ່ານຄຳສັ່ງການນຳເຂົ້າ ແລະ ສົ່ງອອກຂໍ້ມູນ ແລະ ການປັບປຸງຂໍ້ມູນຜ່ານທາງອອນລາຍ | | Q1-4 | Q1-2 | | ບໍ່ມີ |

| | | | | | |
|---|---|---|---|---|---|
| ຂຽນໂປຣແກຣມກ່ຽວກັບ (1) ຂໍ້ມູນ ດ້ານກຳມະສິດທີ່ດິນ, (2) ແບບຟອມ ລົງທະບຽນອອນລາຍ, (3) ການຄ່າທຳ ນຽມສຳລັບການໂອນກຳມະສິດຊັບສິນ | 1. ຂຽນ ToR | | | | LCT |
| | 2. ຈ້າງບໍລິສັດ IT ຂຽນໂປຣແກຣມກິດຈະກຳຍ່ອຍ | Q1-3 | | | |
| ພັດທະນາລະບົບຕິດຕາມເອກະສານ | 1. ຂຽນ ToR | | | | GIZ and World Bank |
| | 2. ຈ້າງບໍລິສັດ IT ຂຽນໂປຣແກຣມ | Q1-3 | | | |
| ປັບປຸງພາລະບົດບາດ ແລະ ໂຄງສ້າງ ພຊສແຂວງ, ນະຄອນຫຼວງ, ຫຊສ ເມືອງ ແລະ ສູນບໍລິການ ທີ່ດິນຕັ້ງຢູ່ | | | | | LCT |

# ການເຂົ້າເຖິງສິນເຊື່ອ

ດັດຊະນີຄວາມ
ເຂັ້ມແຂງຂອງສິດທິ
ທາງກົດຫມາຍ (0-12)

**6 ▸ 6**

ດັດຊະນີຄວາມ
ເລິກເຊິ່ງຂອງຂໍ້ມູນ
ສິນເຊື່ອ (0-8)

**6 ▸ 8**



| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ເຜີຍແຜ່ດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອເກັບກຳຂໍ້ມູນ ເພື່ອສະໜອງໃຫ້ແກ່ການສ້າງຜະລິດຕະພັນໃໝ່ ໃນນີ້ລວມມີບໍລິສັດສາທາລະນຸປະໂພກ ແລະ ກະຊວງທີ່ກ່ຽວຂ້ອງ | 1. ຈັດກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ຢູ່ ພາກເໜືອ, ພາກກາງ ແລະ ພາກໃຕ້. | | | | ບໍ່ມີ |
| | 2. ເຊັນບົດບັນທຶກການຮ່ວມມືກັບບັນດາກະຊວງທີ່ກ່ຽວຂ້ອງ (ປະຈຸບັນແມ່ນສຳເລັດການເຊັນບົດບັນທຶກການຮ່ວມມືກັບ 5 ບໍລິສັດ ສາທາລະນຸປະໂພກຄື: ໄຟຟ້າ, ນ້ຳປະປາ, ອີທີແອລ, ຢູນິເທວ ແລະ ລາວໂທລະຄົມ) | | | | |
| ເຊັນບົດບັນທຶກກັບບັນດາກະຊວງ ແລະ ບໍລິສັດສາທາລະນຸປະໂພກ | 1. ລົງປົກສາຫາລືທາງດ້ານເຕັກນິກ ເພື່ອຮອງຮັບການເກັບກຳຂໍ້ມູນເຂົ້າລະບົບ | Q1 | | | ບໍ່ມີ |
| | 2. ອອກແບບໂຄງສ້າງລະບົບໃນການເກັບກຳຂໍ້ມູນ | Q1 | | | |
| | 3. ຄົ້ນຄ້ວາຮູບແບບການນຳສົ່ງຂໍ້ມູນຂອງແຕ່ລະພາກສ່ວນ | Q1-2 | | | |
| | 4. ປັບປຸງລະບົບຊີໄອບີ ອອນລາຍ ໃຫ້ຮອງຮັບຂໍ້ມູນ | Q2 | | | |
| | 5. ສ້າງບົດລາຍງານພຶດຕິກຳການຊຳລະສະສາງຂໍ້ມູນສາທາລະນຸປະໂພກ | Q3 | | | |
| ສ້າງລະບົບໃໝ່ເພື່ອສ້າງຜະລິດຕະພັນ ເນື່ອງຈາກລະບົບເກົ່າບໍ່ສາມາດສ້າງຜະລິດຕະພັນດັ່ງກ່າວ | 1. ແຈ້ງເປີດກ້ວາງການປະມູນເພື່ອຊອກຫາບໍລິສັດ ໃນການພັດທະນາລະບົບຊີໄອບີ ໃໝ່ credit rating ແລະ credit scoring | Q1 | | | ບໍ່ມີ |
| | 2. ສຳເລັດການຄັດເລືອກບໍລິສັດ | Q2 | | | |
| | 3. ເລີ່ມພັດທະນາລະບົບໃໝ່ | Q2-3 | | | |
| | 4. ບໍລິສັດທີ່ຊະນະການປະມູນທົບທວນບົດຄວາມຕ້ອງການຄືນ (BA & TA) | Q2-3 | | | |
| | 5. ພັດທະນາລະບົບຕາມຄວາມຕ້ອງການໃໝ່ | Q3-4 | | | |
| | 6. ໂອນຖ່າຍຂໍ້ມູນຈາກລະບົບເກົ່າເຂົ້າສູ່ລະບົບໃໝ່ | Q4 | Q1 | | |
| | 7. ທົດສອບການດຳເນີນງານຂອງລະບົບ (UAT) | | Q1-2 | | |
| | 8. ແລ່ນລະບົບໃໝ່ຄຽງຄູ່ກັບລະບົບປັດຈຸບັນ | | Q3-4 | | |
| | 9. ນຳໃຊ້ລະບົບໃໝ່ | | | Q1 | |
| | 10. ກະກຽມຂໍ້ມູນເພື່ອເຮັດບົດລາຍງານໃຫ້ຄະແນນຜະລິດຕະພັນ credit rating ແລະ scoring | | | Q1-3 | |
| | 11. ທົດສອບລະບົບ (UAT) | | | Q4 | |
| | 12. ນຳໃຊ້ລະບົບໃຫ້ຄະແນນຜະລິດຕະພັນ credit rating ແລະ credit scoring | | | | |

# ປົກປ້ອງຜູ້ລົງທຶນລາຍຍ່ອຍ

ດັດຊະນີ
ຂອບເຂດຄວາມໂປ່ງໃສ
ຂອງບໍລິສັດ (0-7)
**0.0 ▸ 7.0**

ດັດຊະນີ
ຂອບເຂດການເປີດເຜີຍ
ຂໍ້ມູນ (0-10)
**6.0 ▸ 10**

ດັດຊະນີ
ຂອບເຂດຄວາມເປັນ
ເຈົ້າຂອງ ແລະ ການ
ຄວບຄຸມ (0-7)
**0.0 ▸ 7.0**

ດັດຊະນີ
ຂອບເຂດຄວາມຮັບຜິດ
ຊອບໜີ້ສິນຂອງຜູ້
ອຳນວຍການ (0-10)
**1.0 ▸ 10**

ດັດຊະນີ
ຂອບເຂດສິດຂອງ
ຜູ້ຖືຫຸ້ນ (0-6)
**0.0 ▸ 6.0**

ດັດຊະນີ
ຄວາມສະດວກການ
ຮ້ອງຟ້ອງຂອງຜູ້ຖືຮຸ້ນ
(0-10)
**3.0 ▸ 3.0**



| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ອີງຕາມແຜນປະຕິບັດງານຂອງໂຕຊີ້ວັດທີ່ 9 ແລະ 10) | ພິຈາລະນາປັບປຸງໂດຍສານປະຊາຊົນສູງສຸດ. | Q1-4 | Q1-2 | | ບໍ່ມີ |
| ສ້າງຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ | ຄົ້ນຄວ້າ | Q1-4 | Q1 | | ບໍ່ມີ |
| | ຮັບຮອງ | | Q2 | | |
| | ເຜີຍແຜ່ | | Q3-4 | Q1-4 | |
| ສ້າງຂໍ້ຕົກລົງວ່າດ້ວຍການຖືຮຸ້ນໄຂ່ວ | ຄົ້ນຄວ້າ | Q1-4 | Q1-4 | Q1 | ບໍ່ມີ |
| | ຮັບຮອງ | | | Q2 | |
| | ເຜີຍແຜ່ | | | Q3-4 | |
| ຄົ້ນຄວ້າ ແລະ ສັງລວມເນື້ອໃນທີ່ຕ້ອງໄດ້ປັບປຸງ ສົ່ງໃຫ້ກະຊວງ ອຄ ພິຈາລະນາປັບປຸງກົດໝາຍວ່າດ້ວຍວິສາຫະກິດ. | ອີງຕາມແຜນດຳເນີນງານຂອງຕົວຊີ້ວັດທີ 1 ກ່ຽວກັບການປັບປຸງກົດໝາຍວ່າດ້ວຍວິສາຫະກິດ | Q1-4 | Q1-4 | Q1-2 | ບໍ່ມີ |

# ການຊໍາລະອາກອນ

ຫຼຸດຈໍານວນຄັ້ງໃນການຊໍາລະອາກອນກໍາໄລ ຈາກ 4ຄັ້ງ[1] ເຫຼືອ 1 ຄັ້ງ/ປີ[2]

ຫຼຸດຈໍານວນຄັ້ງໃນການຊໍາລະອາກອນມູນຄ່າເພີ່ມ ແລະ ອາກອນອື່ນໆ ໃຫ້ເຫຼືອໜ້ອຍທີ່ສຸດ

ຫຼຸດເວລາໃນການຊໍາລະອາກອນມູນຄ່າເພີ່ມ ຈາກ 182ຊົ່ວໂມງ[3]/ປີ ໃຫ້ເຫຼືອໜ້ອຍທີ່ສຸດ

ຫຼຸດເວລາໃນການຊໍາລະອາກອນກໍາໄລ, ແລະ ອາກອນອື່ນໆໃຫ້ເຫຼືອໜ້ອຍທີ່ສຸດ

ປັບປຸງກົນໄກການຊໍາລະອາກອນປະກັນສັງຄົມໃຫ້ສະດວກກ່ວາເກົ່າ




**ໝາຍເຫດ:** ເປົ້າໝາຍຂອງຕົວຊີ້ວັດນີ້ໄດ້ຄັດມາຈາກ ຄໍາສັ່ງ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018

1 ບົດລາຍງານສະພາບການດໍາເນີນທຸລະກິດໃນ ສປປ ລາວ 2018
2 ກົດໝາຍວ່າດ້ວຍອາກອນລາຍໄດ້ (ສະບັບປັບປຸງ), ເລກທີ 67/ສພຊ, ລົງວັນທີ 18/06/2019 ໄດ້ລະບຸຈໍານວນຄັ້ງໃນການຊໍາລະອາກອນກໍາໄລແມ່ນ 2ຄັ້ງ/ປີ
3 ບົດລາຍງານສະພາບການດໍາເນີນທຸລະກິດໃນ ສປປ ລາວ 2018

| ແຜນການປະຕິຮູບ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ຫັນເອົາຫົວໜ່ວຍທຸລະກິດມາແຈ້ງ-ມອບອາກອນຜ່ານລະບົບ TaxRIS (ແຈ້ງ ແລະ ມອບຜ່ານລະບົບອີເລັກໂຕຼນິກ) ໃຫ້ໄດ້ບໍ່ຫຼຸດ 70% ຂອງຜູ້ເສຍອາກອນກຳໄລທັງໝົດ | 1. ຝຶກອົບຮົມພະນັກງານສ່ວຍສາອາກອນຂັ້ນແຂວງ ແລະ ເມືອງ ກ່ຽວກັບການແຈ້ງອາກອນກຳໄລຜ່ານລະບົບ TaxRIS ໃນນະຄອນຫຼວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ; | Q2-4 | | | ບໍ່ມີ |
| | 2. ຝຶກອົບຮົມຫົວໜ່ວຍທຸລະກິດ ກ່ຽວກັບການແຈ້ງອາກອນກຳໄລຜ່ານລະບົບ TaxRIS ໃນນະຄອນຫຼວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ; | Q2-4 | | | |
| | 3. ສ້າງສື່ໂຄສະນາ-ເຜີຍແຜ່ລະບຽບ ແລະ ຂັ້ນຕອນການແຈ້ງ-ມອບອາກອນແຕ່ລະປະເພດ ໃນຮູບແບບສິ່ງພິມ ແລະ ອອນລາຍ ແລະ/ຫຼື ແບບຈຳລອງການຊຳລະອາກອນຜ່ານລະບົບ TaxRIS ເພື່ອຫັນເອົາຫົວໜ່ວຍທຸລະກິດ ເຂົ້າສູ່ການແຈ້ງ ແລະ ຊຳລະຜ່ານທາງອອນລາຍ ຫຼື ລະບົບ TaxRIS. | Q2-4 | | | |
| | 4. ສ້າງໂປຣແກມທົດລອງການແຈ້ງອາກອນທີ່ສາມາດຝຶກໄດ້ດ້ວຍຕົນເອງ | Q3-4 | | | |
| ຜັນຂະຫຍາຍ 3 ກົດໝາຍເປັນນິຕິກຳໃຕ້ກົດໝາຍ ແລະ ຈັດຕັ້ງປະຕິບັດ ເນື່ອງຈາກກົດໝາຍວ່າດ້ວຍອາກອນກຳໄລ (ສະບັບໃໝ່) ໄດ້ປັບຫຼຸດອັດຕາ ຈາກ 24% ມາເປັນ 20% ແລະ ປັບຫຼຸດຈຳນວນຄັ້ງການມອບ ຈາກ 4 ຄັ້ງ ມາເປັນ 2 ຄັ້ງ/ປີ | 1. ຄົ້ນຄວ້າສ້າງນິຕິກຳລຸ່ມກົດໝາຍ ຜັນຂະຫຍາຍ 3 ກົດໝາຍອາກອນ: ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ກົດໝາຍວ່າດ້ວຍອາກອນຊົມໃຊ້. | Q2-4 | Q1 | | ບໍ່ມີ |
| ການກວດກາຫລັງການແຈ້ງອາກອນກຳໄລ | 1. ຄົ້ນຄວ້າສ້າງຄຳແນະນຳ ກ່ຽວກັບການກວດກາຫລັງການແຈ້ງອາກອນກຳໄລ ຕາມພື້ນຖານຄວາມສ່ຽງ | Q2-4 | | | ບໍ່ມີ |
| | 2. ສ້າງຫນ່ວຍງານການກວດກາຫລັງການແຈ້ງອາກອນກຳໄລຕາມພື້ນຖານຄວາມສ່ຽງ | Q3-4 | Q1-4 | | |
| ປັບປຸງຂັ້ນຕອນການຈ່າຍເງິນປະກັນສັງຄົມ | 1. ປຶກສາຫາລືຄວາມເປັນໄປໄດ້ກັບອົງການປະກັນສັງຄົມ ແລະ ພາກສ່ວນກ່ຽວຂ້ອງເພື່ອຊອກຫາຄວາມເປັນໄປໄດ້ໃນການຫລຸດຜ່ອນຈຳນວນຄັ້ງການຈ່າຍ ຈາກເດືອນມາເປັນງວດ ຫລື ການຈ່າຍແບບເອເລັກໂຕຣນິກໂດຍຮ່ວມມືກັບອົງການປະກັນສັງຄົມ | Q3-4 | | | ບໍ່ມີ |
| ການປັບປຸງການຊຳລະອາກອນ, ຄ່າບໍລິການ ແລະ ຄ່າທຳນຽມທີ່ຕິດພັນກັບການໂອນກຳມະສິດຊັບສິນ | 1. ການທົບທວນລັດຖະບັນຍັດເລກທີ 03 ວ່າດ້ວຍຄ່າທຳນຽມ ແລະ ການບໍລິການ ແລະ ຄົ້ນຄວ້າສ້າງກົດຫມາຍວ່າດ້ວຍອາກອນທີ່ດິນ | Q3-4 | Q1-2 | | ບໍ່ມີ |

| | | | | | |
|---|---|---|---|---|---|
| ການປັບປຸງການຊຳລະອາກອນພາຫະນະ (ຄ່າທຳນຽມທາງ) - ປັບປຸງການເກັບຄ່າທຳນຽມທາງໃຫ້ມີປະສິດທິຜົນຢ່າງທົ່ວເຖິງ | 1. ເຊື່ອມຕໍ່ຂໍ້ມູນກັບພາກສ່ວນກ່ຽວຂ້ອງໃຫ້ສຳເລັດ | Q2-4 | Q1-4 | | ບໍ່ມີ |
| | 2. ລົງເກັບກຳສະຖິຕິພາຫະນະ ຢູ່ແຕ່ລະບ້ານ | Q3-4 | Q1-4 | | |
| | 3. ບັງຄັບໃຊ້ການເສຍຄ່າທາງຜ່ານລະບົບອີເລັກໂຕຼນິກ | Q2-4 | Q1-4 | | |
| ປັບປຸງການຊຳລະພາສີທີ່ດິນ (ຜັນຂະຫຍາຍການແບ່ງຂັ້ນຄຸ້ມຄອງລາຍຮັບລະຫວ່າງ ສູນກາງ ແລະ ທ້ອງຖິ່ນ) | 1. ຫັນໃຫ້ມີການຊຳລະຄ່າພາສີທີ່ດິນຜ່ານລະບົບທະນາຄານໃຫ້ໄດ້ເປັນສ່ວນໃຫຍ່; | Q2-4 | Q1-4 | | ບໍ່ມີ |
| | 2. ສ້າງຄວາມຈະແຈ້ງໃນຈັດຕັ້ງປະຕິບັດການແບ່ງຂັ້ນຄຸ້ມຄອງລາຍຮັບພາສີທີ່ດິນລະຫວ່າງ ສູນກາງ ແລະ ທ້ອງຖິ່ນ | Q2-4 | | | |
| ສຶກສາຄວາມເປັນໄປໄດ້ໃນການຫຼຸດຈຳນວນຄັ້ງຈ່າຍເປັນງວດ (4 ຄັ້ງຕໍ່ປີ) ແລະ ປັບປຸງນິຕິກຳເພື່ອຮອງຮັບ | 1. ສຶກສາກົນໄກການແຈ້ງເປັນງວດ | Q3-4 | | | ບໍ່ມີ |
| | 2. ສ້າງນິຕິກຳຮອງຮັບການຈັດຕັ້ງປະຕິບັດ | Q4 | Q1-2 | | |
| ຫັນເອົາຫົວໜ່ວຍທຸລະກິດມາແຈ້ງ-ມອບອາກອນຜ່ານລະບົບ TaxRIS (ແຈ້ງ ແລະ ມອບຜ່ານລະບົບອີເລັກໂຕຼນິກ) ຜັນຂະຫຍາຍກົດຫມາຍວ່າດ້ວຍອາກອນມູນຄ່າເພີ່ມ - ການກວດຄືນຫລັງການແຈ້ງອາກອນມູນຄ່າເພີ່ມ) | 1. ຄົ້ນຄວ້າປັບປຸງລະບົບ ເພື່ອຮັບຮອງການແຈ້ງ ມອບ ອມພ ຜ່ານລະບົບ TaxRIS | Q4 | | | ບໍ່ມີ |
| | 2. ສ້າງຄຳແນະນຳກ່ຽວກັບການກວດກາກ່ອນສົ່ງຄືນ ອມພ ຕາມພື້ນຖານຄວາມສ່ຽງ ດ້ວຍການຖອດຖອນແລກປ່ຽນບົດຮຽນກ່ຽວກັບ ການກວດກາກ່ອນສົ່ງຄືນເງິນ ອມພ ນຳປະເທດອ້ອມຂ້າງ | Q3-4 | Q1 | | |
| | 3. ຝຶກອົບຮົມເຜີຍຄຳແນະນຳ ກ່ຽວກັບການກວດກາສົ່ງຄືນເງິນ ອມພ ໃຫ້ພະນັກງານສ່ວຍສາອາກອນ ແລະ ນັກທຸລະກິດ ໃນນະຄອນຫລວງວຽງຈັນ, ຫລວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ | | Q1-4 | | |
| ຜັນຂະຫຍາຍກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ແລະ ການສົ່ງຄືນອາກອນມູນຄ່າເພີ່ມ | 1. ສ້າງລະບຽບການ, ກົນໄກ ແລະ ຄຳແນະນຳການສົ່ງຄືນອາກອນມູນຄ່າເພີ່ມ | Q2-4 | | | |
| | 2. ສັງລວມລະບຽບການຂັ້ນຕອນ ກ່ຽວກັບການສົ່ງຄືນເງິນອາກອນມູນຄ່າເພີ່ມ ເພື່ອເຜີຍແຜ່ຜ່ານຮູບແບບສິ່ງພິມ ແລະ ອອນລາຍ | Q2-3 | | | |

# ການຄ້າລະຫວ່າງປະເທດ

ເວລາໃນການປະຕິບັດການຕາມລະບຽບການດ້ານຊາຍແດນເພື່ອນໍາເຂົ້າ ໃຫ້ຫຼຸດເຫຼືອ 50% (ຈາກ 14 ຊົ່ວໂມງ)[4]

ເວລາໃນການປະຕິບັດການຕາມລະບຽບການດ້ານຊາຍແດນເພື່ອ ສົ່ງອອກໃຫ້ຫຼຸດເຫຼືອ 50% (ຈາກ 12 ຊົ່ວໂມງ)[5]

ເວລາໃນການປະຕິບັດຄວາມຖືກຕ້ອງດ້ານເອກະສານເພື່ອນໍາເຂົ້າ ໃຫ້ຫຼຸດເຫຼືອ 50%[6]

ເວລາໃນການປະຕິບັດຄວາມຖືກຕ້ອງດ້ານເອກະສານເພື່ອສົ່ງອອກ ໃຫ້ຫຼຸດເຫຼືອ 50% (ຈາກ 216 ຊົ່ວໂມງ)[7]




**ໝາຍເຫດ:** ເປົ້າໝາຍຂອງຕົວຊີ້ວັດນີ້ໄດ້ຄັດມາຈາກ ຄໍາສັ່ງ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018

4 ບົດລາຍງານສະພາບການດໍາເນີນທຸລະກິດໃນ ສປປ ລາວ (Ease of Doing Business Report) 2018
5 ບົດລາຍງານສະພາບການດໍາເນີນທຸລະກິດໃນ ສປປ ລາວ (Ease of Doing Business Report) 2018
6 ບໍ່ມີຕົວເລກສົມທຽບໃນບົດລາຍງານສະພາບການດໍາເນີນທຸລະກິດໃນ ສປປ ລາວ (Ease of Doing Business Report) 2018
7 ບົດລາຍງານສະພາບການດໍາເນີນທຸລະກິດໃນ ສປປ ລາວ (Ease of Doing Business Report) 2018

| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ພັດທະນາລະບົບການບໍລິຫານ ຄວາມສ່ຽງຮ່ວມກັນລະຫວ່າງ ເຈົ້າໜ້າທີ່ທີ່ກ່ຽວຂ້ອງປະຈຳດ່ານ (ພາສີ, ກັກກັນພືດ-ສັດ, ອາຫານ ແລະ ຢາ) | 1. ປັບປຸງຄ່າຄວາມສ່ຽງໃນລະບົບ ອາຊີກູດາ ໂດຍລວມເອົາຄ່າຄວາມສ່ຽງຂອງຂະແໜງການລັດອື່ນໆເຂົ້ານຳ | | | | LCT |
| | 2. ສ້າງກົນໄກກວດກາຮ່ວມກັບຂະແໜງການລັດອື່ນໆ ທີ່ປະຈຳ ຢູ່ດ່ານຊາຍແດນ | Q1 | | | |
| | 3. ເຜີຍແຜ່ຜົນການສຶກສາ TRS 2019 | | | | |
| | 4. ຈັດສຳມະນາ TRS ຮ່ວມກັບ ບັນດາຂະແໜງການລັດທີກ່ຽວຂ້ອງ ເພື່ອສ້າງຄວາມເຂົ້າໃຈຂັ້ນພື້ນຖານ ແລະ ສ້າງແຜນໃນການສຶກສາ TRS ຮ່ວມກັນ | Q1 | | | |
| | 5. ແຕ່ງຕັ້ງຄະນະຮັບຜິດຊອບ TRS 2020 | Q2 | | | |
| | 6. ສຶກສາ TRS 2020 | Q4 | | | |
| ປັບປຸງບັນດານິຕິກຳ:<br>1. ດຳລັດວ່າດ້ວຍການສົ່ງອອກ ຜະລິດຕະພັນແຮ່ທາດ ເລກທີ 90/ນຍ, ລົງວັນທີ 09/6/2008.<br>2. ຂໍ້ຕົກລົງ ວ່າດ້ວຍ ລະບຽບການຂໍອະນຸຍາດ ນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0352/ພບ, ລົງວັນທີ 13/3/2012.<br>3. ຂໍ້ຕົກລົງ ວ່າດ້ວຍການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0481/ພບ, ລົງວັນທີ 20/4/2012.<br>4. ແຈ້ງການ ກ່ຽວກັບຂັ້ນຕອນ ການສະເໜີແຜນການ ຈຳໜ່າຍແລະ ການຈຳໜ່າຍ ຜະລິດຕະພັນແຮ່ທາດ ເລກທີ 0011/ກຄຣ3, ລົງວັນທີ 04/1/2019. | 1. ທົບທວນຄືນເນື້ອໃນນິຕິກຳດັ່ງກ່າວ | Q1 | | | ບໍ່ມີ |
| | 2. ຈັດຈ້າງຊ່ຽວຊານດ້ານກົດໝາຍເພື່ອຊ່ວຍປັບປຸງນິຕິກຳ | Q1 | | | |
| | 3. ຮ່າງໜັງສືສະເໜີ ລມຕ ກະຊວງ ພບ ພິຈາລະນາ ການປັບປຸງນິຕິກຳດັ່ງກ່າວ ອາດຈະລວມເນື້ອໃນຂອງບັນດານິຕິກຳດັ່ງກ່າວເຂົ້າເປັນດຳລັດສະບັບດຽວກັນ. | Q2 | | | |
| | 4. ສ້າງແຜນວຽກໃນການປັບປຸງ | Q2 | | | |
| | 5. ຈັດກອງປະຊຸມຮ່ວມກັບຂະແໜງການກ່ຽວຂ້ອງ ເພື່ອປຶກສາຫາລືວິທີຈັດຕັ້ງປະຕິບັດ | Q4 | | | |
| | 6. ດຳເນີນການຄົ້ນຄວ້າ ແລະ ປັບປຸງນິຕິກຳດັ່ງກ່າວ | Q4 | | | |
| | 7. ສົ່ງຮ່າງດຳລັດໃຫ້ຂະແໜງການກ່ຽວຂ້ອງ ເພື່ອປະກອບຄຳຄິດເຫັນ | | Q1 | | |
| | 8. ປັບປຸງຮ່າງດຳລັດ ຕາມຄຳເຫັນຂອງຂະແໜງການກ່ຽວຂ້ອງ. | | Q1 | | |
| | 9. ຈັດກອງປະຊຸມເປີດກວ້າງລະດົມຄຳຄິດເຫັນທັງພາກລັດ ແລະ ເອກະຊົນ | | Q2 | | |
| | 10. ປັບປຸງຕາມຄຳເຫັນຂອງກອງປະຊຸມ | | | Q1 | |

| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| | 11. ສະເໜີຮ່າງດຳລັດ ຕໍ່ກອງປະຊຸມລັດຖະບານ | | | Q2 | ບໍ່ມີ |
| | 12. ປັບປຸງ ພາຍຫຼັງກອງປະຊຸມລັດຖະບານ | | | Q2 | |
| | 13. ສະເໜີຕໍ່ກອງປະຊຸມລັດຖະບານ ເທື່ອສຸດທ້າຍ | | | Q3 | |
| | 14. ປັບປຸງ ພາຍຫຼັງກອງປະຊຸມລັດຖະບານ | | | Q3 | |
| | 15. ສະເໜີລັດຖະບານເຊັນດຳລັດ | | | Q4 | |
| | 16. ລົງຈົດໝາຍເຫດທາງລັດຖະການ ນຳກະຊວງຍຸຕິທຳ | | | Q4 | |
| ສ້າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຊິ້ນສ່ວນຍານພາຫະນະ ສຳລັບຜະລິດ ແລະ ປະກອບຢູ່ໂຮງງານ ໃນ ສປປ ລາວ. | 1. ຜ່ານຮ່າງຂໍ້ຕົກລົງເຮັດວຽກຮ່ວມກັບພະແນກນິຕິກຳ | Q2 | | | GIZ-RELATED |
| | 2. ຜ່ານເນື້ອໃນຮ່ວມກັບພະແນກ ອຄ ແຂວງທີ່ມີໂຮງງານປະກອບລົດຕັ້ງຢູ່ | Q3 | | | |
| | 3. ຈັດກອງປະຊຸມກັບພາກສ່ວນທີ່ກ່ຽວຂ້ອງ ແລະ ນັກທຸລະກິດ | Q3 | | | |
| | 4. ປັບປຸງລຽບລຽງຕາມຄຳເຫັນ | Q3 | | | |
| | 5. ຜ່ານ ແລະ ຮຽບຮຽງກັບພະແນກນິຕິກຳ, ຫ້ອງການເພື່ອເອກະພາບຂັ້ນຕອນສຸດທ້າຍ ແລະ ມີຄຳເຫັນ | Q4 | | | |
| | 6. ສະເໜີ ລມຕ ຮັບຮອງ | Q4 | | | |
| | 7. ຈັດຕັ້ງເຜີຍແຜ່ ຂໍ້ຕົກລົງຍານພາຫະນະ ພາຍຫຼັງເຊັນຮັບຮອງແລ້ວ ຮ່ວມກັບພາກລັດທີ່ກ່ຽວຂ້ອງ ແລະ ນັກທຸລະກິດ | Q4 | | | |
| ສ້າງກົດໝາຍ ວ່າດ້ວຍຍານພາຫະນະໃຫ້ສອດຄ່ອງກັບສະພາບການຕົວຈິງ ເພື່ອປ່ຽນແທນຂໍ້ກຳນົດ 4312/ຄຂປກ ແລະ ທັງເປັນການຜັນຂະຫຍາຍຂໍ້ຕົກລົງ ວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນ ໃນກອບຂອງວຽກງານຊິ້ນສ່ວນຍານພາຫະນະອາຊຽນ (ASEAN MRA) | 1. ຄົ້ນຄ້ວາຮ່າງກົດໝາຍຍານພາຫະນະທາງບົກ | Q2 | | | GIZ-RELATED |
| | 2. ຈ້າງຊ່ຽວຊານພາຍໃນ | Q2 | | | |
| | 3. ຈັດກອງປະຊຸມທາບທາມເປີດກ້ວາງທົ່ວປະເທດ | Q2 | | | |
| | 4. ຜ່ານຮ່າງກົດໝາຍທີ່ກອງປະຊຸມລັດຖະບານ | Q2 | | | |
| | 5. ຜ່ານຮ່າງກົດໝາຍ ກອງປະຊຸມສະພາແຫ່ງຊາດ | Q2 | | | |
| | 6. ປັບປຸງຮ່າງລະບຽບ ວ່າດ້ວຍການກຳນົດມາດຕະຖານເຕັກນິກຍານພາຫະນະໃຫ້ສອດຄ່ອງກັບ MRA | Q4 | | | |

# ການບັງຄັບໃຊ້ສັນຍາ

ການບັງຄັບໃຊ້
ຄຳພິພາກສາ

**365**

ມື້

ໜ້ອຍກວ່າ

**100**

ມື້



| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ປັບປຸງກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ | 1. ກອງປະຊຸມປັບປຸງເນື້ອໃນຮ່າງກົດໝາຍ | | | | ບໍ່ມີ |
| | 2. ກອງປະຊຸມຜ່ານຮ່າງກົດໝາຍຮ່ວມກັບຄະນະຮັບຜິດຊອບ, ຄະນະນຳກະຊວງ | Q1 | | | |
| | 3. ທາບທາມຮ່າງກົດໝາຍຢູ່ສູນກາງ | Q1 | | | |
| | 4. ທາບທາມຮ່າງກົດໝາຍຢູ່ 3 ພາກ (ແບ່ງເປັນ 3 ກຸ່ມ ລົງແຕ່ລະພາກ) | Q1 | | | |
| | 5. ກອງປະຊຸມຮຽບຮຽງຮ່າງກົດໝາຍຕາມການທາບທາມ | Q1 | | | |
| | 6. ສະເໜີຮ່າງກົດໝາຍຜ່ານຄະນະນຳກະຊວງຍຸຕິທຳ | Q1 | | | |
| | 7. ສະເໜີຮ່າງກົດໝາຍ ເພື່ອນຳເຂົ້າພິຈາລະນາຕໍ່ກອງປະຊຸມລັດຖະບານ | Q1 | | | |
| | 8. ຈັດກອງປະຊຸມປັບປຸງເນື້ອໃນຕາມຄຳເຫັນຂອງສະມາຊິກລັດຖະບານ | Q1 | | | |
| | 9. ສະເໜີຮ່າງກົດໝາຍສະບັບປັບປຸງຕາມຄຳເຫັນຂອງສະມາຊິກລັດຖະບານ ຕໍ່ຄະນະນຳກະຊວງຍຸຕິທຳ | Q1 | | | |
| | 10. ສະເໜີຮ່າງກົດໝາຍຕໍ່ລັດຖະບານເພື່ອພິຈາລະນາສະເໜີຕໍ່ສະພາແຫ່ງຊາດ | Q1 | | | |
| | 11. ກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ | Q1-2 | | | |
| | 12. ສະເໜີຮ່າງກົດໝາຍຕໍ່ຄະນະປະຈຳສະພາ | Q1-2 | | | |
| | 13. ກວດກາ, ຮຽບຮຽງຮ່າງກົດໝາຍ ຕາມຄຳເຫັນຂອງສະມາຊິກສະພາແຫ່ງຊາດ | Q2-3 | | | |
| ສ້າງຂີດຄວາມສາມາດໃນການເຜີຍແຜ່ກົດໝາຍວ່າດ້ວຍຄ່າທຳນຽມສານ ໃຫ້ແກ່ພະນັກງານສານປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ | 1. ຈັດຝຶກອົບຮົມ ແລະ ເຜີຍແຜ່ກົດໝາຍວ່າດ້ວຍຄ່າທຳນຽມສານ ໃຫ້ແກ່ພະນັກງານສານປະຊາຊົນ (ເໜືອ, ກາງ ແລະ ໃຕ້) | Q1-2 | | | ບໍ່ມີ |
| | 2. ຈັດຝຶກອົບຮົມ ແລະ ເຜີຍແຜ່ກົດໝາຍວ່າດ້ວຍຄ່າທຳນຽມສານ ສຳລັບພາກສ່ວນທີ່ກ່ຽວຂ້ອງ | Q1 | | | |
| | 3. ສ້າງໃບປີວ, ແຜ່ນພັບ ແລະ ປ້າຍໂຄສະນາຕ່າງໆກ່ຽວກັບຄ່າທຳນຽມສານຕິດໃສ່ສຳນັກງານສານປະຊາຊົນທົ່ວປະເທດ, ລົງໃນວາລະສານ ສານປະຊາຊົນ ແລະ ແຈກຢາຍຕໍ່ພາກສ່ວນທີ່ສົນໃຈ | Q2 | | | |
| ປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ | 1. ເກັບກຳຂໍ້ມູນ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນໄລຍະຜ່ານມາ | Q1 | | | ບໍ່ມີ |
| | 2. ກອງປະຊຸມວິຊາການໃນການປັບປຸງ | Q2 | | | |
| | 3. ກອງປະຊຸມຜ່ານເນື້ອໃນກັບຄະນະຊີ້ນຳ | Q2 | | | |
| | 4. ກອງປະຊຸມທາບທາມຄຳເຫັນເປີດກວ້າງ (ເໜືອ, ກາງ ແລະ ໃຕ້) | Q2-3 | | | |
| | 5. ສະເໜີຮ່າງກົດໝາຍຕໍ່ກອງປະຊຸມລັດຖະບານ | Q3 | | | |

| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ປັບປຸງກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ | 6. ສະເໜີຮ່າງກົດໝາຍຕໍ່ຄະນະປະຈຳສະພາແຫ່ງຊາດ | Q3 | | | ບໍ່ມີ |
| | 7. ຜ່ານຮ່າງກົດໝາຍຕໍ່ກອງປະຊຸມສະພາແຫ່ງຊາດ | Q4 | | | |
| | 8. ກອງປະຊຸມຄະນະຮັບຜິດຊອບປັບປຸງຄຳເຫັນຂອງສະມາຊິກສະພາ | Q4 | | | |
| | 9. ປະກາດໃຊ້ກົດໝາຍ. | Q4 | | | |
| ສ້າງລະບຽບການດຳເນີນຄະດີການຄ້າສະເພາະແຕ່ລະປະເພດຄະດີ (Fast Track) | 1. ເກັບກຳຂໍ້ມູນທີ່ຈຳເປັນ | | | | ບໍ່ມີ |
| | 2. ກອງປະຊຸມວິຊາການໃນການກຳນົດຮ່າງໂຄງສ້າງລະບຽບການດຳເນີນຄະດີການຄ້າ | Q2-3 | | | |
| | 3. ກອງປະຊຸມຜ່ານໂຄງສ້າງຂອງລະບຽບການດຳເນີນຄະດີການຄ້າກັບຄະນະຊີ້ນຳ | Q2-3 | | | |
| | 4. ກອງປະຊຸມວິຊາການໃນການກຳນົດເນື້ອໃນໃສ່ຮ່າງລະບຽບການດຳເນີນຄະດີການຄ້າ | Q2-3 | | | |
| | 5. ກອງປະຊຸມຜ່ານເນື້ອໃນກັບຄະນະຊີ້ນຳ | Q2-3 | | | |
| | 6. ກອງປະຊຸມທາບທາມຄຳເຫັນ ຕໍ່ຮ່າງລະບຽບການກັບບັນດາຜູ້ພິພາກສາຂອງສານປະຊາຊົນສູງສຸດ (ຜູ້ພິພາກສາທີ່ບໍ່ແມ່ນສະມາຊິກສະພາຜູ້ພິພາກສາ) ແລະ ສານປະຊາຊົນທ້ອງຖິ່ນ | Q2-3 | | | |
| | 7. ກອງປະຊຸມທາບທາມຄຳເຫັນກັບສະມາຊິກສະພາຜູ້ພິພາກສາ | Q2-3 | | | |
| | 8. ກອງປະຊຸມປະກອບຄຳເຫັນແບບຮອບດ້ານໃສ່ຮ່າງລະບຽບການດຳເນີນຄະດີການຄ້າກັບສະມາຊິກສະພາຜູ້ພິພາກສາ | Q2-3 | | | |
| | 9. ສະເໜີຮ່າງລະບຽບການດຳເນີນຄະດີການຄ້າ ໃນກອງປະຊຸມສະພາຜູ້ພິພາກສາ | Q2-3 | | | |
| | 10. ກອງປະຊຸມຄະນະຮັບຜິດຊອບປັບປຸງຄຳເຫັນ ຕາມກອງປະຊຸມສະພາຜູ້ພິພາກສາ | Q2-3 | | | |
| ປັບປຸງໂຄງປະກອບການຈັດຕັ້ງຂອງຄະນະສານການຄ້າ ໂດຍສຸມໃສ່ການສ້າງຕັ້ງໜ່ວຍງານທີ່ພິຈາລະນາຄະດີສະເພາະດ້ານເປັນຕົ້ນ: ໜ່ວຍງານຊັບສິນທາງປັນຍາ, ໜ່ວຍງານລົ້ມລະລາຍຂອງວິສາຫະກິດ, ໜ່ວຍງານພິຈາລະນາຄະດີຂອງທະນາຄານ, ໜ່ວຍງານພິຈາລະນາຄະດີນຳເຂົ້າ - ສົ່ງອອກ ແລະ ອື່ນໆ | 1. ປັບປຸງຂໍ້ຕົກລົງຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະສານການຄ້າ | Q1-2 | | | ບໍ່ມີ |
| | 2. ສ້າງແຜນປັບປຸງໂຄງປະກອບການຈັດຕັ້ງຂອງຄະນະສານການຄ້າ | Q1-2 | | | |
| | 3. ສະເໜີແຜນປັບປຸງໂຄງປະກອບການຈັດຕັ້ງຂອງຄະນະສານການຄ້າ; ໃຫ້ສະພາຜູ້ພິພາກສາຮັບຮອງ | Q1-2 | | | |
| | 4. ຄົ້ນຄວ້າຊັບຊ້ອນພະນັກງານຂອງແຕ່ລະໜ່ວຍງານຂອງຄະນະສານທັງໃນສານປະຊາຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ | Q1-2 | | | |
| | 5. ປະກາດສ້າງຕັ້ງໜ່ວຍງານຕ່າງໆຕາມແຕ່ລະໄລຍະ. | Q1-2 | | | |

| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ສ້າງຄວາມອາດສາມາດໃຫ້ແກ່ຜູພິພາກສາ ໃນການດຳເນີນຄະດີການຄ້າ. | 1. ຈັດຝຶກອົບຮົມສະເພາະຮອງປະທານຜູ້ຊີ້ນຳ, ຫົວໜ້າຄະນະສານ ແລະ ຜູ້ພິພາກສາ | Q3-4 | | | ບໍ່ມີ |
| | 2. ຈັດຝຶກອົບຮົມສະເພາະຜູ້ຊ່ວຍພິພາກສາ, ຈ່າສານ ແລະ ພະນັກງານວິຊາການຂອງສານປະຊາຊົນ | Q3-4 | | | |
| ການສ້າງລະບົບຄວບຄຸມການດຳເນີນຄະດີການຄ້າ (Commercial Case Management system). | 1. ການວ່າຈ້າງຜູ້ຊ່ຽວຊານໃນການອອກແບບລະບົບ | Q3-4 | | | ບໍ່ມີ |
| | 2. ເກັບກຳຂໍ້ມູນທີ່ຈຳເປັນຮ່ວມກັບຜູ້ຊ່ຽວຊານ | Q3-4 | | | |
| | 3. ອອກແບບລະບົບທີ່ແທດເໝາະກັບເງື່ອນໄຂໃນປັດຈຸບັນ | Q3-4 | | | |
| | 4. ນຳສະເໜີລະບົບຕໍ່ສະມາຊິກສະພາຜູ້ພິພາກສາເພື່ອຮັບຮອງ | Q3-4 | | | |
| | 5. ດຳເນີນການຂຽນໂປຣແກມ | Q3-4 | | | |
| | 6. ຈັດຊື້-ຈັດຫາອຸປະກອນທີ່ຈຳເປັນຕໍ່ລະບົບ | Q3-4 | | | |
| | 7. ທົດລອງນຳໃຊ້ຕົວຈິງ ແລະ ປັບປຸງໃນແຕ່ລະໄລຍະ | Q3-4 | | | |
| | 8. ເປີດນຳໃຊ້ຕົວຈິງ. | Q3-4 | | | |

# ການແກ້ໄຂການລົ້ມລະລາຍ

ດັດຊະນີການເລີ່ມດຳເນີນການ (0-3)

**02 ➤ 03**

ດັດຊະນີການບໍລິຫານຊັບສິນຂອງລູກໜີ້ (0-6)

**02 ➤ 04**

ດັດຊະນີການປັບປຸງໂຄງສ້າງຂອງວິສາຫະກິດ (0-3)

**0.5 ➤ 02**

ດັດຊະນີການເຂົ້າຮ່ວມຂອງເຈົ້າໜີ້ (0-4)

**0.0 ➤ 02**



| ກິດຈະກຳ | ກິດຈະກຳຍ່ອຍ | ໄລຍະເວລາ | | | ຜູ້ໃຫ້ທຶນ |
|---|---|---|---|---|---|
| | | 2020 | 2021 | 2022 | |
| ສ້າງສື່ສິ່ງພິມເພື່ອເພີ່ມປະສິດທິພາບໃນການຈັດຕັ້ງປະຕິບັດການລົ້ມລະລາຍຂອງສານປະຊາຊົນສູງສຸດ | 1. ການຮ່າງຄຳແນະນຳຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການຈັດຕັ້ງປະຕິບັດການລົ້ມລະລາຍ | Q2-3 | | | ບໍ່ມີ |
| | 2. ຈັດພິມກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ ແລະ ບັນດານິຕິກຳທີ່ກ່ຽວຂ້ອງ ພ້ອມທັງຈັດຕັ້ງເຜີຍແຜ່ໃຫ້ | Q2-3 | | | |
| | 3. ຮ່າງແບບພິມຂອງສານທີ່ຕິດພັນກັບວຽກງານການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ | Q1 | | | |
| | 4. ສ້າງຄູ່ມືໃນການດຳເນີນຄະດີລົ້ມລະລາຍ | Q3-4 | | | |
| ສ້າງລະບົບການຄຸ້ມຄອງການດຳເນີນຄະດີລົ້ມລະລາຍຂອງວິສາຫະກິດ (Bankruptcy Case Management system) | | Q2-3 | | | ບໍ່ມີ |
| ສ້າງຄວາມອາດສາມາດໃນວຽກງານລົ້ມລະລາຍຂອງວິສາຫະກິດໃຫ້ແກ່ພະນັກງານຂອງສານປະຊາຊົນສູງສຸດ ແລະ ພາກສ່ວນທີ່ກ່ຽວຂ້ອງ | | Q2-4 | | | ບໍ່ມີ |
| ປັບປຸງ ແລະ ປ່ຽນຊື່ຈາກກົດໝາຍວ່າດ້ວຍການລົ້ມລະລາຍມາເປັນກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ | 1. ນຳຮ່າງກົດຫມາຍເຂົ້າພິຈາລະນາກອງປະຊຸມສະໄຫມສາມັນຂອງສະພາແຫ່ງຊາດ | | | | ບໍ່ມີ |
| | 2. ກອງປະຊຸມປັບປຸງ ແລະ ຮຽບຮຽງຮ່າງກົດຫມາຍຕາມຄຳເຫັນຂອງກອງປະຊຸມສະພາແຫ່ງຊາດ | | | | |
| | 3. ສະເຫນີຮ່າງກົດຫມາຍຕໍ່ປະທານສະພາແຫ່ງຊາດເພື່ອພິຈາລະນາປະກາດໃຊ້ | Q1 | | | |
| | 4. ຈັດກອງປະຊຸມຮຽບຮຽງ ຄຳເຫັນຂອງສະມາຊິກສະພາແຫ່ງຊາດໃນກອງປະຊຸມສະພາແຫ່ງຊາດສະໄໝສາມັນເທື່ອທີ VIII ຊຸດທີ VIII | Q1 | | | |
| | 5. ຈັດພິມປຶ້ມກົດໝາຍວ່າດ້ວຍການຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ | Q1 | | | ບໍ່ມີ |
| | 6. ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍການຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ | Q2-4 | | | |